ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

24 - 30 ກັນຍາ 2023

ປີທີ 12

ສະບັບທີ 939

ລາຍສັບປະດາ


## ກວດກາເນື້ອໃນຮ່າງກົດໝາຍວ່າດ້ວຍການຮັກສາສຸຂະພາບຂັ້ນຕົ້ນ



(ສພຊ) ໃນລະຫວ່າງວັນທີ 16-17 ກັນຍາຜ່ານມາ, ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ສະພາແຫ່ງຊາດ ຮ່ວມກັບກະຊວງສາທາລະນະສຸກ ໄດ້ຈັດກອງປະຊຸມກວດກາເນື້ອໃນຮອບດ້ານຮ່າງກົດໝາຍວ່າດ້ວຍການຮັກສາສຸຂະພາບ ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ, ມີບັນດາທ່ານລັດຖະມົນຕີ, ຮອງລັດຖະມົນຕີກະຊວງສາທາລະນະສຸກ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ບັນດາທ່ານຮອງປະທານກຳມາທິການ ຂອງສະພາແຫ່ງຊາດ, ບັນດາທ່ານຄະນະທີ່ປຶກສາດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ, ທ່ານຫົວໜ້າ-ຮອງຫົວໜ້າກົມ ຕະຫຼອດຮອດພະນັກງານ-ລັດຖະກອນ ແລະ ຈາກພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໂດຍປະຕິບັດຕາມແຜນການສ້າງ ແລະ ປັບປຸງກົດໝາຍປະຈຳປີ 2023 ແລະ ກົດໝາຍວ່າດ້ວຍການສ້າງນິຕິກຳ ກ່ຽວກັບການມອບສິດໃຫ້ກວດກາຮ່າງກົດໝາຍ ແລະ ເນື້ອໃນຂອງການກວດກາຮ່າງກົດໝາຍ, ເພື່ອຮັບປະກັນທາງດ້ານເນື້ອໃນຂອງຮ່າງກົດໝາຍວ່າດ້ວຍການຮັກສາສຸຂະພາບຂັ້ນຕົ້ນທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ມີການຄົ້ນຄວ້າຮ່າງກົດໝາຍມີຄວາມຮັດກຸມ, ຈະແຈ້ງ, ສອດຄ່ອງກັບແນວທາງນະໂຍບາຍຂອງລັດ, ລັດຖະທຳມະນູນ, ກົດໝາຍອື່ນໆ.

ກອງປະຊຸມ ໄດ້ຮັບຟັງບົດສະເໜີກ່ຽວກັບການສ້າງກົດໝາຍວ່າດ້ວຍການຮັກສາສຸຂະພາບຂັ້ນຕົ້ນ ໂດຍທ່ານ ດຣ. ສະໜອງ ທອງຊະນະ ຮອງລັດຖະມົນຕີກະຊວງສາທາລະນະສຸກ ເຊິ່ງຮ່າງກົດໝາຍສະບັບນີ້ ປະກອບມີ XI ພາກ, 6 ໝວດ ແລະ 78 ມາດຕາ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນໂດຍອົງການອະນາໄມໂລກ ປະຈຳ ສປປ ລາວ.

**(ກຸກກິກ ບຸດດາໄຊ)**


## ຂ່າວໜ້າໃນ



ສຳເລັດການເຂົ້າຮ່ວມ... (ໜ້າ 3)



ກອງປະຊຸມຄະນະຊີ້ນຳ... (ໜ້າ 4)




ກຽມພ້ອມຮັບມືກັບສັງຄົມ... (ໜ້າ 12)


## ກວທສ ຮ່ວມກັບ ກະຊວງສາທາລະນະສຸກ ຈັດກອງປະຊຸມ ກວດກາເນື້ອໃນຮ່າງກົດໝາຍວ່າດ້ວຍການປິ່ນປົວ

(ສພຊ) ກອງປະຊຸມກວດກາເນື້ອໃນຮອບດ້ານ ຮ່າງກົດໝາຍວ່າດ້ວຍການການປິ່ນປົວ (ສະບັບປັບປຸງ) ໄດ້ມີຂຶ້ນໃນລະຫວ່າງວັນທີ 18-19 ກັນຍາ 2023 ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ, ມີບັນດາ



ທ່ານຮອງປະທານກຳມາທິການວັດທະນະທຳ-ສັງຄົມ, ກຳມາທິການກົດໝາຍ ສະພາແຫ່ງຊາດ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງລັດຖະມົນຕີກະຊວງສາທາລະນະສຸກ, ບັນດາທ່ານຄະນະທີ່ປຶກສາດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ, ຜູ້ຕາງໜ້າຈາກໂຮງໝໍມິດຕະພາບ, ໂຮງໝໍເດັກ, ມີຄະນະກົມ, ຄະນະພະແນກ ແລະ ວິຊາການທີ່ກ່ຽວຂ້ອງຂອງສະພາ

ອ່ານຕໍ່ໜ້າ 2

## ກົດໝາຍວ່າດ້ວຍຊັບສິນທາງປັນຍາ ຈະນຳເຂົ້າພິຈາລະນາ ໃນກອງປະຊຸມສະໄໝສາມັນ ເທື່ອທີ 6

(ສພຊ) ເພື່ອຮັບປະກັນທາງດ້ານເນື້ອໃນຂອງຮ່າງກົດໝາຍວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ມີການຄົ້ນຄວ້າ ເຮັດໃຫ້ຮ່າງກົດໝາຍມີຄວາມຮັດກຸມ, ຈະແຈ້ງ, ສອດຄ່ອງກັບແນວທາງນະໂຍບາຍຂອງລັດ, ລັດຖະທຳມະນູນ, ກົດໝາຍອື່ນ, ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ແລະ ແທດເໝາະກັບສະພາບ



ການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະ ເພື່ອເປັນການລະດົມສະຕິປັນຍາຈາກທຸກພາກສ່ວນທີ່ກ່ຽວຂ້ອງກັບການສ້າງ ແລະ ປັບປຸງກົດໝາຍກ່ອນນຳສະເໜີກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິຈາລະນານຳເຂົ້າກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX. ດັ່ງນັ້ນ, ໃນລະຫວ່າງວັນທີ 20-23 ກັນຍາ 2023 ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໄດ້ມີກອງປະຊຸມກວດກາເນື້ອໃນຮອບດ້ານຮ່າງກົດໝາຍວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ໂດຍການເປັນປະທານຂອງ

ອ່ານຕໍ່ໜ້າ 2

## ສສຊ ແລະ ສສຂ ເຜີຍແຜ່ຜົນສຳເລັດ ກອງປະຊຸມສະໄໝສາມັນ ເທື່ອທີ 5



(ສພຊ) ເພື່ອເປັນການຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ບັນດາມະຕິຮັບຮອງໃນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດຊຸດທີ IX ແລະ ສະພາປະຊາຊົນແຂວງຊຸດທີ II ແນໃສ່ເຮັດໃຫ້ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ລະບົບກົງຈັກການຈັດຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນແຂວງ ພ້ອມທັງເປັນການພົບປະ ແລະ ຮັບຟັງກ່ຽວກັບຄຳສະເໜີຂອງປະຊາຊົນ ເພື່ອນຳສະເໜີຕໍ່ຄະນະນຳຂັ້ນເທິງ

ອ່ານຕໍ່ໜ້າ 4

## ປະເມີນກົດໝາຍ ໃນຂົງເຂດ ສະພາແຫ່ງຊາດ ຢູ່ນະຄອນຫຼວງວຽງຈັນ

(ສພຊ) ປະຕິບັດຕາມແຜນສ້າງແລະປັບປຸງກົດໝາຍຂອງສະພາແຫ່ງຊາດ ຊຸດທີ IX ໄດ້ມີແຜນປັບປຸງກົດໝາຍຂົງເຂດສະພາແຫ່ງຊາດຮັບຜິດຊອບ. ກອງປະຊຸມປະເມີນກົດໝາຍ 4 ສະບັບ ໃນຂົງເຂດສະພາແຫ່ງຊາດຮັບຜິດຊອບ ໄດ້ຈັດຂຶ້ນໃນລະຫວ່າງວັນທີ 11-12 ກັນຍາຜ່ານມາ, ທີ່ຫ້ອງປະຊຸມໃຫຍ່ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ກຳມະການສຳຮອງສູນກາງພັກ,



ປະທານກຳມາທິການເສດຖະກິດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ, ເຂົ້າຮ່ວມມີທ່ານ ບຸນທາມ ພຸດທະວົງສາ ຮອງປະທານສະພາ

ອ່ານຕໍ່ໜ້າ 2

## ເລຂາທິການໃຫຍ່ AIPA ສຳເລັດການຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ



(ສພຊ) ໃນລະຫວ່າງວັນທີ 17-21 ກັນຍາ 2023 ທ່ານ ນາງ ຊິຕິ ໂຣໄຊເມຣິຢັນຕິ ດາໂຕະ ຣາຈິ ອັບດຸນ ຣາມັນ ເລຂາທິການໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ພ້ອມດ້ວຍຄະນະ ໄດ້ເດີນທາງມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ ເພື່ອປຶກສາຫາລື ແລະ ກະກຽມຄວາມພ້ອມ ຮ່ວມກັບສະພາ

ອ່ານຕໍ່ໜ້າ 3



## ກົດໝາຍ...

(ຕໍ່ຈາກໜ້າ 1)

ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ອຳໄພຈິດ ມານິນ ຮອງປະທານກຳມາທິການກົດໝາຍ, ທ່ານ ຄຳມ່ອນ ຊົມສີຫາ ປັນຍາ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ; ມີຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ, ບັນດາທ່ານຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ, ຄະນະກົມ, ຄະນະພະແນກ ແລະ ວິຊາການທີ່ກ່ຽວຂ້ອງ.

ກອງປະຊຸມ, ໄດ້ຮັບຟັງການຜ່ານບົດສະເໜີກ່ຽວກັບການປັບປຸງກົດໝາຍວ່າດ້ວຍຊັບສິນທາງປັນຍາ ຈາກທ່ານນາງ ຈັນສຸກ ແສງພະຈັນ ຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ໂດຍໄດ້ຍົກໃຫ້ເຫັນສະພາບການຈັດຕັ້ງປະຕິບັດໄລຍະຜ່ານມາ, ເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງກົດໝາຍ, ຂະບວນການຄົ້ນຄວ້າປັບປຸງກົດໝາຍ, ໂຄງປະກອບ ແລະ ເນື້ອໃນສຳຄັນຂອງຮ່າງກົດໝາຍ ແລະ ອື່ນໆ ເຊິ່ງໃນໄລຍະຜ່ານມາ ເຫັນວ່າຍັງບໍ່ທັນແທດເໝາະກັບສະພາບຕົວຈິງ ແລະ ບໍ່ສອດຄ່ອງກັບເງື່ອນໄຂຂອງການພັດທະນາເສດຖະກິດສັງຄົມໃນປັດຈຸບັນ, ຍັງມີບາງເນື້ອໃນທີ່ບໍ່ຈະແຈ້ງ, ລະອຽດ, ຮັດກຸມ ແລະ ຄົບຖ້ວນ ເພື່ອຮັບປະກັນຜົນປະໂຫຍດຂອງເຈົ້າຂອງຊັບສິນທາງປັນຍາ ແລະ ປະຊາຊົນລາວບັນດາເຜົ່າ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນສຸມໃສ່ຄົ້ນຄວ້າຢ່າງມີຈຸດສຸມ ແລະ ກົງໄປກົງມາ ຕໍ່ກັບເນື້ອໃນຂອງຮ່າງກົດໝາຍ ເຊິ່ງປະກອບມີ XI ພາກ, 22 ໝວດ ແລະ 142 ມາດຕາ.

ໃນຕອນທ້າຍຂອງກອງປະຊຸມ, ທ່ານ ສົມມາດ ພົລເສນາ ໄດ້ມີຄຳເຫັນກ່າວປິດວ່າ: ກອງປະຊຸມຄັ້ງນີ້ ໄດ້ດຳເນີນເປັນເວລາ 2 ວັນເຕັມ ເຊິ່ງເຕັມໄປດ້ວຍຄວາມຮັບຜິດຊອບສູງຂອງບັນດາທ່ານຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ແລະ ດຳເນີນໄປດ້ວຍບັນຍາກາດຟົດຟື້ນ ກົງໄປກົງມາ ດ້ວຍເຫດ ແລະ ຜົນ ເຮັດໃຫ້ກອງປະຊຸມໃນຄັ້ງນີ້ສາມາດບັນລຸຜົນສຳເລັດໂດຍພື້ນຖານ ຜ່ານການຄົ້ນຄວ້າ, ປະກອບຄຳເຫັນຂອງບັນດາທ່ານຜູ້ແທນກອງປະຊຸມ ເຫັນວ່າສາມາດເຫັນດີເປັນເອກະພາບຕໍ່ການປັບປຸງຂອງຄະນະຮັບຜິດຊອບ ແລະ ກອງເລຂາ. ພ້ອມນັ້ນ, ກໍມອບໃຫ້ຄະນະຮັບຜິດຊອບປັບປຸງກົດໝາຍດັ່ງກ່າວກະກຽມບົດລາຍງານ ເພື່ອລາຍງານຜົນກອງປະຊຸມໃນຄັ້ງນີ້ ຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໃນທ້າຍເດືອນກັນຍາ 2023 ນີ້.

**(ອານິຕາ ມ່ວນສະຫວັດ)**

## ປະເມີນກົດໝາຍ...

(ຕໍ່ຈາກໜ້າ 1)

ປະຊາຊົນນະຄອນຫຼວງວຽງຈັນ, ທ່ານ ພູວົງ ວົງຄຳຊາວ ຮອງເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາທ່ານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1, ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າພະແນກການຂອງອົງການປົກຄອງນະຄອນຫຼວງ, ຂົງເຂດຕຸລາການ, ຄະນະນຳຈາກ 2 ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຈົ້າເມືອງ, ສາມອົງການຈັດຕັ້ງມະຫາຊົນ, ສະຖາບັນການສຶກສາ ພ້ອມດ້ວຍພະນັກງານ-ລັດຖະກອນຈາກສະພາແຫ່ງຊາດ ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ເຂົ້າຮ່ວມ.

ທ່ານ ປະທານກອງປະຊຸມ ໄດ້ມີຄຳເຫັນຕໍ່ກອງປະຊຸມ ໂດຍເນັ້ນໃຫ້ເຫັນຄວາມໝາຍຄວາມສຳຄັນໃນການສ້າງ ແລະ ປັບປຸງກົດໝາຍ ເພື່ອໃຫ້ສອດຄ່ອງກັບການຂະຫຍາຍຕົວຂອງສັງຄົມ ແລະ ເງື່ອນໄຂສະພາບຄວາມເປັນຈິງ, ການສ້າງ ແລະ ປັບປຸງກົດໝາຍແມ່ນໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ ແລະ ການຈັດກອງປະຊຸມຄັ້ງນີ້ ກໍເພື່ອເປັນການຍາດແຍ່ງເອົາຄຳຄິດຄຳເຫັນຂອງບັນດາຜູ້ເຂົ້າຮ່ວມກອງປະຊຸມຈາກພາກສ່ວນຕ່າງໆ ໃນສັງຄົມ ເພື່ອນຳໄປຄົ້ນຄວ້າປັບປຸງໃຫ້ມີເນື້ອໃນຄົບຖ້ວນສົມບູນ, ເມື່ອກົດໝາຍດັ່ງກ່າວຫາກໄດ້ຖືກຮັບຮອງແລ້ວ ຈະກາຍເປັນເຄື່ອງມືສຳຄັນໃນການປະຕິບັດສິດ, ໜ້າທີ່ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງໃຫ້ມີຄຸນນະພາບສູງຂຶ້ນຕື່ມ.

ໃນກອງປະຊຸມ, ຄະນະຮັບຜິດຊອບໄດ້ຜ່ານບົດປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບຄື: ບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສະພາແຫ່ງຊາດ; ບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ; ບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການເລືອກຕັ້ງ ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມ ກໍໄດ້ປະກອບຄຳຄິດເຫັນຢ່າງຟົດຟື້ນ ຕໍ່ເນື້ອໃນມາດຕາຕ່າງໆ ຂອງກົດໝາຍ 4 ສະບັບ ໄປແຕ່ລະໝວດ ແຕ່ລະມາດຕາ ຕາມຄຳຖາມເຈາະຈີ້ມຂອງປະທານກອງປະຊຸມຢ່າງມີຈຸດສຸມ ແລະ ກົງໄປກົງມາ, ບັນດາຄຳຄິດຄຳເຫັນດັ່ງກ່າວສຸດທີ່ສຳຄັນ ເຊິ່ງໃນຕອນທ້າຍຂອງກອງປະຊຸມ ທ່ານປະທານກອງປະຊຸມ ໄດ້ມອບໝາຍໃຫ້ຄະນະກອງເລຂາສັງລວມແລະລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ແລະ ຄະນະປັບປຸງກົດໝາຍດັ່ງກ່າວ ເພື່ອນຳໄປພິຈາລະນາປັບປຸງໃຫ້ສົມບູນຂຶ້ນ.

**(ນັກຂ່າວ: ກສຕສ)**

## ກອທສ...

(ຕໍ່ຈາກໜ້າ 1)

ແຫ່ງຊາດ, ກະຊວງຍຸຕິທຳ, ກະຊວງສາທາລະນະສຸກ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ພາກສ່ວນທີ່ກ່ຽວຂ້ອງ. ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນໂດຍມູນນິທິເອເຊຍ ປະຈຳ ສປປ ລາວ.

ໂອກາດນີ້, ທ່ານ ຄຳໃບ ດຳລັດ ໄດ້ກ່າວເປີດກອງປະຊຸມ ເຊິ່ງທ່ານໃຫ້ຮູ້ວ່າ: ຮ່າງກົດໝາຍວ່າດ້ວຍການປິ່ນປົວ (ສະບັບປັບປຸງ) ທີ່ລັດຖະບານສະເໜີຫາຄະນະປະຈຳສະພາແຫ່ງຊາດ ຕາມໜັງສືສະເໜີສະບັບເລກທີ 66/ລບ, ລົງວັນທີ 29 ສິງຫາ 2023 ເຊິ່ງກະຊວງສາທາລະນະສຸກໄດ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ດຳເນີນການຄົ້ນຄວ້າປັບປຸງຕາມຂັ້ນຕອນຂອງການສ້າງ ແລະ ປັບປຸງກົດໝາຍ ຕາມກົດໝາຍວ່າດ້ວຍການສ້າງນິຕິກຳ, ສະນັ້ນ ການຈັດກອງປະຊຸມໃນຄັ້ງນີ້ຈຶ່ງມີຄວາມໝາຍຄວາມສຳຄັນຫຼາຍ ເພາະຈະເປັນການຄົ້ນຄວ້າເນື້ອໃນຂອງຮ່າງກົດໝາຍຢ່າງລະອຽດ, ຮອບດ້ານ ແນໃສ່ເຮັດໃຫ້ຮ່າງກົດໝາຍມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສາມາດນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄຂຂຶ້ນໃນທ້າຍເດືອນຕຸລາ 2023.

ໃນວາລະກອງປະຊຸມ, ທ່ານ ດຣ. ສະໜອງ ທອງຊະນະ ຮອງລັດຖະມົນຕີກະຊວງສາທາລະນະສຸກ ໄດ້ຂຶ້ນຜ່ານບົດສະເໜີການປັບປຸງກ່ຽວກັບກົດໝາຍວ່າດ້ວຍການປິ່ນປົວ ໂດຍໄດ້ຍົກໃຫ້ເຫັນສະພາບການຈັດຕັ້ງປະຕິບັດໄລຍະຜ່ານມາ, ເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງກົດໝາຍ, ຂະບວນການຄົ້ນຄວ້າປັບປຸງກົດໝາຍ, ໂຄງປະກອບ ແລະ ເນື້ອໃນສຳຄັນຂອງຮ່າງກົດໝາຍ ແລະ ອື່ນໆ ເຊິ່ງໃນໄລຍະຜ່ານມາ ເຫັນວ່າຍັງບໍ່ທັນແທດເໝາະກັບສະພາບຕົວຈິງ ແລະ ບໍ່ສອດຄ່ອງກັບເງື່ອນໄຂຂອງການພັດທະນາເສດຖະກິດ-ສັງຄົມໃນປັດຈຸບັນ, ຍັງມີບາງເນື້ອໃນທີ່ບໍ່ຈະແຈ້ງ, ລະອຽດ, ຮັດກຸມ ແລະ ຄົບຖ້ວນ ໃນການເຄື່ອນໄຫວ, ຄຸ້ມຄອງ ແລະ ຕິດຕາມກວດກາວຽກງານປິ່ນປົວ ເຊິ່ງເຮັດໃຫ້ມີຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດຕົວຈິງ ແລະ ຍັງມີຫຼາຍບັນຫາທີ່ເກີດຂຶ້ນຕົວຈິງ ທີ່ຍັງບໍ່ໄດ້ຖືກກຳນົດໃນກົດໝາຍສະບັບນີ້.

ໃນກອງປະຊຸມ, ຄະນະຮັບຜິດຊອບປັບປຸງກົດໝາຍ ແລະ ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນຄົ້ນຄວ້າ, ປະກອບຄຳເຫັນ ແລະ ເປັນເອກກະພາບກັນໃສ່ຮ່າງກົດໝາຍ ຢ່າງກົງໄປກົງມາ ວ່າດ້ວຍການປິ່ນປົວ (ສະບັບປັບປຸງ) ເຊິ່ງປະກອບມີ VIII ພາກ ແລະ 65 ມາດຕາ ເພື່ອເຮັດໃຫ້ເນື້ອໃນຂອງກົດໝາຍດັ່ງກ່າວຄົບຖ້ວນ ແລະ ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍອື່ນທີ່ປະກາດໃຊ້ແລ້ວ, ສົນທິສັນຍາ, ສັນຍາສາກົນທີ່ກ່ຽວຂ້ອງ ແລະ ການຈັດຕັ້ງປະຕິບັດຕົວຈິງ.

**(ປາກາລັກ ພົມມີໄຊ)**




***# ຄັດໂດຍ: ຫອມສະນິດ***

*❒ ມອບ-ຮັບ ຜູ້ຖືກຫາຄະດີສໍ້ໂກງຊັບທາງລະບົບໂທລະຄົມຂ້າມຊາດ ໃຫ້ເຈົ້າໜ້າທີ່ຕຳຫຼວດ ສປ ຈີນ ທັງໝົດ 164 ຄົນ, ຍິງ 13 ຄົນ. ໃນນີ້, ມີຜູ້ຖືກຫາຖືກກັກຕົວຢູ່ຈຸດນະຄອນຫຼວງວຽງຈັນ 77 ຄົນ, ເຂດເສດຖະກິດພິເສດສາມຫຼ່ຽມຄຳ ແຂວງບໍ່ແກ້ວ 46 ຄົນ, ແຂວງວຽງຈັນ 22 ຄົນ ແລະ ແຂວງສະຫວັນນະເຂດ 19 ຄົນ.*

***ໜສພ. ປະເທດລາວ 12/09/2023***

*❒ ລັດຖະບານ ໄດ້ວາງຄາດສູ້ຊົນດຶງດູດນັກທ່ອງທ່ຽວໃຫ້ໄດ້ 2 ລ້ານ 5 ແສນຄົນ ພາຍໃນປີ 2023 ແລະ ສືບຕໍ່ປະຕິບັດຄາດໝາຍປີ 2024 ໃຫ້ໄດ້ 2 ລ້ານ 7 ແສນຄົນ. ໃນນັ້ນ, ມີໄທ, ສປ ຈີນ, ຫວຽດນາມ, ສ. ເກົາຫຼີ, ເອີຣົບ, ອາເມລິກາ ແລະ ຊາດອື່ນໆ. ພ້ອມດຽວກັນນີ້, ແຂວງຫຼວງພະບາງກໍໄດ້ຕັ້ງເປົ້າດຶງດູດນັກທ່ອງທ່ຽວໃຫ້ໄດ້ 1 ລ້ານຄົນ ໃນປີ 2023 ແລະ ຈະໃຫ້ໄດ້ 2 ລ້ານ 8 ແສນຄົນ ໃນປີ 2025. ສະເພາະ 6 ເດືອນຕົ້ນປີ 2023 ມີນັກທ່ອງທ່ຽວເຂົ້າມາທ່ຽວຫຼວງພະບາງແລ້ວ 546.000 ຄົນ ໂດຍປະມານ 43,9% ແມ່ນມາຈາກໄທ, ຝຣັ່ງ, ອັງກິດ, ເຢຍລະມັນ, ສປ ຈີນ ແລະ ອາເມຣິກາ ສ້າງລາຍຮັບຫຼາຍກວ່າ 313 ລ້ານໂດລາ.*

***ໜສພ. ປະເທດລາວ 14/09/2023***

*❒ ປີ 2022 ຜ່ານມາ, ກະຊວງສາທາລະນະສຸກ ໄດ້ມີຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານຫຼາຍດ້ານ ໂດຍສະເພາະການສົ່ງເສີມໂພຊະນາການໃນແມ່ຍິງ, ແມ່, ເດັກອ່ອນ ແລະ ເດັກນ້ອຍທີ່ ໄດ້ຈັດຕັ້ງປະຕິບັດໃນໄລຍະທີ່ຜ່ານມາ ເຮັດໃຫ້ເກືອບ 60% ຂອງເດັກນ້ອຍທີ່ເກີດໃໝ່ໄດ້ກິນນົມແມ່ພາຍໃນ 1 ຊົ່ວໂມງທຳອິດຫຼັງຈາກການເກີດ ປະຕິບັດໄດ້ລື່ນຄາດໝາຍທີ່ກຳນົດໄວ້ແມ່ນ 46%, ຄຽງຄູ່ກັນນີ້ ແມ່ຍິງຖືພາຈຳນວນຫຼາຍໃນຂອບເຂດທົ່ວປະເທດ ໄດ້ຮັບການໃຫ້ຄຳປຶກສາກ່ຽວກັບການໃຫ້ນົມລູກ, ການໃຫ້ອາຫານເສີມ ແລະ ຕິດຕາມການເຕີບໃຫຍ່ຂອງເດັກນ້ອຍໃນແຕ່ລະໄລຍະ, ສຳລັບເດັກນ້ອຍອາຍຸລຸ່ມ 6 ເດືອນທີ່ໄດ້ກິນນົມແມ່ພຽງຢ່າງດຽວຕ້ອງ ໄດ້ລໍຖ້າຜົນການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ 3.*

***ໜສພ. ປະຊາຊົນ 15/09/2023***

# ເຜີຍແຜ່ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບປັບປຸງ ປີ 2022 ຢູ່ 3 ແຂວງ

(ສພຊ) ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ໄດ້ຮັບການຈັດຕັ້ງປະຕິບັດເປັນເອກະພາບກັນໃນທົ່ວປະເທດ ແລະ ສ້າງຄວາມຮັບຮູ້, ເຂົ້າໃຈ ໃຫ້ແກ່ທ້ອງຖິ່ນຮາກຖານ, ພະນັກງານ-ລັດຖະກອນ ແລະ ປະຊາຊົນລາວບັນດາເຜົ່າຕໍ່ເນື້ອໃນກົດໝາຍ ແນໃສ່ເຮັດໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງສາມາດປະຕິບັດພາລະບົດບາດຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນໄດ້ເປັນຢ່າງດີ; ໃນລະຫວ່າງວັນທີ 18-22 ກັນຍາ 2023, ທ່ານ ສີສູນທອນ ສ.ຜາບມີໄຊຍ໌ ຮອງປະທານກຳມາທິການຍຸຕິທຳ ສະພາແຫ່ງຊາດ ແລະ ທ່ານ ຈັນທະລາ ອຸດົມສຸກ ກຳມະການປະຈຳກຳມາທິການຍຸຕິທຳ ພ້ອມດ້ວຍຄະນະ ສົມທົບກັບສະພາປະຊາຊົນແຂວງ ໄດ້ເຄື່ອນໄຫວເຜີຍແຜ່ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບປັບປຸງ ປີ 2022 ຢູ່ 6 ຈຸດ ຂອງ 3 ແຂວງ ຄື: ແຂວງບໍລິຄຳໄຊ ແມ່ນຢູ່ສະພາປະຊາຊົນແຂວງ, ຫ້ອງວ່າການປົກຄອງເມືອງປາກກະດິງ; ແຂວງຄຳມ່ວນ ແມ່ນຢູ່ຫ້ອງວ່າການປົກຄອງແຂວງ, ຫ້ອງປະຊຸມກອງບັນຊາການທະຫານເມືອງເຊບັ້ງໄຟ ແລະ ແຂວງສະຫວັນນະເຂດ ແມ່ນຢູ່ໂຮງຮຽນທິດສະດີການເມືອງ-ການປົກຄອງແຂວງ, ສະໂມສອນເມືອງອຸທຸມພອນ ເຊິ່ງມີຜູ້



ເຂົ້າຮ່ວມຮັບຟັງທີ່ມາຈາກຫຼາຍພາກສ່ວນ ເປັນຕົ້ນແມ່ນບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ຫ້ອງວ່າການແຂວງ-ເມືອງ, ຂົງເຂດຕຸລາການຂອງແຂວງ-ເມືອງ, ພະແນກການອ້ອມຂ້າງແຂວງ, ຫ້ອງການອ້ອມຂ້າງເມືອງ, ກອງບັນຊາການ ປກຊ-ປກສ ແຂວງ-ເມືອງ, ສະຫະພັນນັກຮົບເກົ່າ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ຄະນະບ້ານ ແລະ ພະນັກງານກ່ຽວຂ້ອງ ທັງໝົດ 403 ຄົນ, ຍິງ 116 ຄົນ.

ໂອກາດນີ້, ໄດ້ຮັບຟັງການເຜີຍແຜ່ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບປັບປຸງປີ 2022 ໂດຍທ່ານ ໄກມະນິນ ເທບບົວລີ ຫົວໜ້າກົມຄຳຮ້ອງຂໍຄວາມເປັນທຳ ກຳມາທິການຍຸຕິທຳສະພາແຫ່ງຊາດ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ພ້ອມກັນສຸມໃສ່ຄົ້ນຄວ້າແລກປ່ຽນຄຳເຫັນຢ່າງກວ້າງຂວາງ, ສ້າງສັນ ແລະ ກົງໄປກົງມາ.

ໃນພິທີ, ທ່ານ ສີສູນທອນ ສ.ຜາບມີໄຊຍ໌ ປະທານກອງປະຊຸມໄດ້ກ່າວວ່າ: ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບທຳອິດ ໄດ້ຖືກສ້າງຂຶ້ນ ແລະ ຖືກປະກາດໃຊ້ໃນປີ 2005 ແລະ ໄດ້ຮັບການປັບປຸງມາແລ້ວ 3 ຄັ້ງ ຄື: ຄັ້ງໜຶ່ງໃນປີ 2014, ຄັ້ງທີສອງ ໃນປີ 2016 ແລະ ຄັ້ງທີສາມ ໃນປີ 2022 ເຊິ່ງການປັບປຸງແຕ່ລະຄັ້ງກໍເພື່ອແນໃສ່ເຮັດໃຫ້ວຽກງານແກ້ໄຂຄຳຮ້ອງທຸກ ມີຄວາມໂລ່ງລຽນ, ສອດຄ່ອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະອົງການ, ຮັບປະກັນການບໍລິການຮັບໃຊ້ປະຊາຊົນໃຫ້ມີຄວາມວ່ອງໄວ ແລະ ສາມາດປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າຕາມກົດໝາຍ. ສະນັ້ນ, ຍ້ອນເຫັນໄດ້ຄວາມສຳຄັນຂອງວຽກງານດັ່ງກ່າວ ຈຶ່ງຈຳເປັນຕ້ອງໄດ້ມີການເຜີຍແຜ່ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ໃຫ້ກວ້າງຂວາງໄປທົ່ວໃນສັງຄົມໂດຍສະເພາະການຈັດຕັ້ງ ແລະ ພະນັກງານທີ່ຮັບຜິດຊອບໃນການແກ້ໄຂຄຳຮ້ອງທຸກ ລວມເຖິງປະຊາຊົນບັນດາເຜົ່າໃນຂອບເຂດທົ່ວປະເທດ ໃຫ້ໄດ້ຮັບຮູ້ ແລະ ເຂົ້າໃຈ ເນື້ອໃນໃຫ້ມີຄວາມເປັນເອກະພາບກັນ ກ່ຽວກັບການນຳໃຊ້ ແລະ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ.

**(ສຸພາວັນ ທອມສະນິດ)**



# ສຳເລັດການເຂົ້າຮ່ວມກອງປະຊຸມສະມາຊິກ ລັດຖະສະພາໜຸ່ມໂລກ ຄັ້ງທີ 9 ຢູ່ ສສ. ຫວຽດນາມ




(ສພຊ) ໃນລະຫວ່າງວັນທີ 14-17 ກັນຍາ 2023, ຄະນະຜູ້ແທນຄະນະສະມາຊິກສະພາແຫ່ງຊາດໜຸ່ມ ສະພາແຫ່ງຊາດລາວ ນຳໂດຍທ່ານ ແກ້ວຈະເລີນ ເຊຍປີ້ງຢ່າງ ຮອງປະທານກຳມາທິການບັນດາເຜົ່າ, ປະທານຄະນະສະມາຊິກສະພາແຫ່ງຊາດໜຸ່ມ ພ້ອມດ້ວຍຄະນະ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມສະມາຊິກລັດຖະສະພາໜຸ່ມໂລກ ຄັ້ງທີ 9 ຂອງສະຫະພັນລັດຖະສະພາສາກົນ (IPU) ທີ່ຮ່າໂນຍ, ສສ.ຫວຽດນາມ.

ກອງປະຊຸມດັ່ງກ່າວ, ມີຄະນະຜູ້ແທນຈາກປະເທດສະມາຊິກສະຫະພັນລັດຖະສະພາສາກົນ (IPU) ເຂົ້າຮ່ວມທັງໝົດ 69 ປະເທດ ພ້ອມດ້ວຍຕົວແທນຈາກຄະນະເລຂາທິການໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA), ເລຂາທິການໃຫຍ່ສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ (APF) ແລະ ອົງການສາກົນຕ່າງໆ ລວມທັງໝົດຈຳນວນ 300 ທ່ານ.

ກອງປະຊຸມຄັ້ງນີ້ ດຳເນີນໄປພາຍໃຕ້ຫົວຂໍ້ຫຼັກບົດບາດຂອງໄວໜຸ່ມໃນການເລັ່ງລັດການບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs) ຜ່ານການຫັນເປັນດີຈີຕອນ ແລະ ນະວັດຕະກຳ. ຊຶ່ງຄະນະຜູ້ແທນທີ່ເຂົ້າຮ່ວມກໍໄດ້ຮ່ວມກັນແລກປ່ຽນຄຳຄິດຄຳເຫັນ ແລະ ປຶກສາຫາລືໃນ 3 ຫົວຂໍ້ຍ່ອຍທີ່ສຳຄັນ ແລະ ພົ້ນເດັ່ນຢ່າງຕັ້ງໜ້າ ໂດຍທ່ານ ປອ. ກໍລະກັນ ພົມມະວົງ ສະມາຊິກສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດໜຸ່ມ ໄດ້ປະກອບຄຳເຫັນໃນຫົວຂໍ້ທີ 1 "ການຫັນເປັນດີຈີຕອນ (Digital transformation)" ແລະ ຫົວຂໍ້ທີ 2 "ນະວັດຕະກຳ ແລະ ການເລີ່ມຕົ້ນທຸລະກິດ (Innovation and startups)" ຊຶ່ງເປັນການແລກປ່ຽນຄຳເຫັນຢ່າງກົງໄປກົງມາ ໂດຍໄດ້ເວົ້າເຖິງການເລີ່ມຕົ້ນຫັນເປັນດີຈີຕອນ ແລະ ສົ່ງເສີມນະວັດຕະກຳໃໝ່ ໃນ ສປປ ລາວ, ວິໄສທັດ, ແຜນຍຸດທະສາດ, ການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງ ເພື່ອດຳເນີນທຸລະກິດດີຈີຕອນ, ການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນການພັດທະນາ ໂດຍສະເພາະແມ່ນການສົ່ງເສີມໄວໜຸ່ມໃນການພັດທະນາເສດຖະກິດ-ສັງຄົມ. ພ້ອມດຽວກັນນີ້, ໃນມື້ທີສອງຊຶ່ງເປັນຫົວຂໍ້ສຸດທ້າຍຂອງກອງປະຊຸມ ທ່ານ ອຸດົມ ວົງໄກສອນ ສະມາຊິກສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດໜຸ່ມ ກໍໄດ້ປະກອບຄຳເຫັນໃນຫົວຂໍ້ "ຊຸກຍູ້ການເຄົາລົບ ຄວາມຫຼາກຫຼາຍດ້ານວັດທະນະທຳເພື່ອສະໜັບສະໜູນການພັດທະນາແບບຍືນຍົງ (Promoting respect for cultural diversity in support of sustainable development)" ເຊິ່ງໄດ້ເປັນການແລກປ່ຽນຄຳເຫັນຕໍ່ກັບການພັດທະນາທາງດ້ານວັດທະນະທຳ, ຮີດຄອງປະເພນີ, ໂດຍໄດ້ເນັ້ນເຖິງບົດບາດ ແລະ ຄວາມສຳຄັນຂອງໄວໜຸ່ມໃນການປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ເຜີຍແຜ່ຮີດຄອງປະເພນີ ແລະ ວັດທະນະທຳຜ່ານການຫັນເປັນດີຈີຕອນທັນສະໄໝຫຼາຍຂຶ້ນ.

ໃນໂອກາດເຂົ້າຮ່ວມກອງປະຊຸມດັ່ງກ່າວ, ຄະນະຜູ້ແທນກໍຍັງໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລື ກັບສະມາຊິກລັດຖະສະພາໜຸ່ມ ຂອງບັນດາປະເທດສະມາຊິກສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຊຶ່ງໃນພິທີເປີດ ທ່ານ ແກ້ວຈະເລີນ ເຊຍປີ້ງຢ່າງ, ຮອງປະທານກຳມາທິການບັນດາເຜົ່າ, ປະທານຄະນະສະມາຊິກສະພາແຫ່ງຊາດໜຸ່ມ ກໍໄດ້ຮັບກຽດປະກອບຄຳເຫັນກ່າວເປີດງານໃນນາມທີ່ ສປປ ລາວ ໄດ້ຮັບໜ້າທີ່ເປັນເຈົ້າພາບກອງປະຊຸມສຸດຍອດລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ຢູ່ນະຄອນຫຼວງວຽງຈັນໃນທ້າຍປີ 2024.

ນອກຈາກນັ້ນ, ຄະນະຜູ້ແທນລາວ ຍັງໄດ້ມີໂອກາດການພົບປະໂອ້ລົມກັບສະມາຊິກລັດຖະສະພາໜຸ່ມ ຂອງບັນດາປະເທດສະມາຊິກ IPU ຈາກປະເທດ ກັນຊາເນຍ ແລະ ປະເທດ ເບລາຣຸດ ເປັນຕົ້ນ. ພ້ອມທັງ ຍັງໄດ້ໃຫ້ສຳພາດກັບສຳນັກຂ່າວແຫ່ງຊາດຂອງສສ. ຫວຽດນາມ ຈຳນວນ 2 ຊ່ອງ ແລະ ໃນວາລະສຸດທ້າຍ, ໄດ້ເຂົ້າຮ່ວມຊົມການສະແດງວັດທະນະທຳ ແລະ ເດີນທາງໄປທ່ຽວຊົມສະຖານທີ່ສຳຄັນ ແລະ ມີຊື່ສຽງຈຳນວນໜຶ່ງຂອງ ສສ. ຫວຽດນາມ ເຊັ່ນ: ອ່າວຮ່າລອງເບ ແລະ ສະຖານທີ່ອື່ນໆ.

## ເລຂາທິການ...

(ຕໍ່ຈາກໜ້າ 1)

ແຫ່ງຊາດລາວໃນການເປັນເຈົ້າພາບຈັດກອງປະຊຸມ AIPA ຄັ້ງທີ 45 ທີ່ ສປປ ລາວ ໃນປີ 2024.

ໃນໄລຍະຢູ່ສປປ ລາວ, ທ່ານເລຂາທິການໃຫຍ່ AIPA ພ້ອມດ້ວຍຄະນະ ໄດ້ພົບປະເຮັດວຽກກັບ ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ແລະ ຮ່ວມກັນຈັດກອງປະຊຸມສຳມະນາກັບຄະນະນຳຂອງກຳມາທິການທີ່ກ່ຽວຂ້ອງ, ສະມາຊິກສະພາແຫ່ງຊາດ ແລະ ພະນັກງານ-ວິຊາການ ຂອງສະພາແຫ່ງຊາດລາວ ເພື່ອປຶກສາຫາລືກ່ຽວກັບການກະກຽມເປັນເຈົ້າພາບຈັດກອງປະຊຸມໃຫຍ່ AIPA ຄັ້ງທີ 45 ຢູ່ ສປປ ລາວ ໃນປີ 2024 ທີ່ຈະມາເຖິງ.

ນອກຈາກນັ້ນ, ທ່ານເລຂາທິການໃຫຍ່ AIPA ພ້ອມດ້ວຍຄະນະ ຍັງໄດ້ເດີນທາງໄປຢ້ຽມຢາມ ແຂວງຫຼວງພະບາງ ເພື່ອເບິ່ງການພັດທະນາທາງດ້ານການເຊື່ອມໂຍງເຊື່ອມຈອດຂອງ ສປປ ລາວ ກໍຄືການສົ່ງເສີມການພັດທະນາເສດຖະກິດ-ສັງຄົມ, ການທ່ອງທ່ຽວຢູ່ເມືອງມໍລະດົກໂລກ ຕາມນະໂຍບາຍສົ່ງເສີມການເຊື່ອມໂຍງເຊື່ອມຈອດ ຂອງ ສປປລາວ.



**ສສຊ ແລະ ສສຂ...**

(ຕໍ່ຈາກໜ້າ 1)

ກໍຄືພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຮູ້ ແລະ ພິຈາລະນາແກ້ໄຂຕາມຄວາມເໝາະສົມໃນຕໍ່ໜ້າ.

ສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ໄຊຍະບູລີ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ II ຢູ່ເມືອງເງິນ ແລະ ເມືອງທົ່ງສາ ໃນລະຫວ່າງວັນທີ 6-7 ກັນຍາ 2023 ເຊິ່ງຢູ່ເມືອງເງິນ ນຳໂດຍທ່ານ ລີເບີ ລີບີອປາວ ສສຊ ປະຈຳເຂດເລືອກຕັ້ງ, ພ້ອມດ້ວຍ ສສຊ, ສສຂ ປະຈຳເຂດເລືອກຕັ້ງເມືອງເງິນ ໄດ້ເຄື່ອນໄຫວຢູ່ສະໂມສອນເມືອງເງິນ ແຂວງໄຊຍະບູລີ; ມີຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າຫ້ອງການ, ອົງການ, ກົມກອງ, ຫົວໜ້າອຳນວຍການໂຮງຮຽນ, ໂຮງໝໍ, ຫົວໜ້າຄຸ້ມຄອງດ່ານສາກົນນ້ຳເງິນ, ລັດວິສາຫະກິດ ແລະ ພະນັກງານ-ລັດຖະກອນໃນທົ່ວເມືອງເຂົ້າຮ່ວມ.

ທີ່ເມືອງທົ່ງສາ ນຳໂດຍທ່ານ ບຸນລ້ອນ ຊົມສີຫາປັນຍາ ສສຊ ປະຈຳເຂດເລືອກຕັ້ງ ພ້ອມດ້ວຍ ສສຊ, ສສຂ ປະຈຳເຂດເລືອກຕັ້ງເມືອງທົ່ງສາ ແລະ ຄະນະ ໄດ້ລົງ 3 ຈຸດຂອງເມືອງທົ່ງສາຄື: ບ້ານປາກຫ້ວຍຍາງ, ບ້ານນາປຸ່ງ ແລະ ສະໂມສອນໃຫຍ່ຂອງເມືອງ, ເຂົ້າຮ່ວມມີທ່ານ ຄຳຫຼ້າ ພົວວັນນາ ກຳມະການພັກແຂວງ, ເລຂາພັກເມືອງ, ເຈົ້າເມືອງທົ່ງສາ; ມີຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າຫ້ອງການ, ອົງການ-ກົມກອງ, ສະມາຊິກພັກ, ພະນັກງານຫຼັກແຫຼ່ງ ແລະ ອົງການປົກຄອງບ້ານພ້ອມປະຊາຊົນ 2 ບ້ານດັ່ງກ່າວເຂົ້າຮ່ວມຢ່າງພ້ອມພຽງ.

ໃນການເຄື່ອນໄຫວເຜີຍແຜ່ຢູ່ແຕ່ລະຈຸດ, ບັນດາທ່ານ ສສຊ ແລະ ສສຂ ໄດ້ຜັດປ່ຽນກັນຂຶ້ນເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງກອງປະຊຸມໄດ້ຄົ້ນຄວ້າພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນ ຄື: ຮັບຮອງເອົາບົດລາຍງານລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນຕົ້ນປີ 2023, ຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023, ຮັບຮອງເອົາວິໄສທັດຮອດປີ 2040 ແລະ ຍຸດທະສາດການພັດທະນາແຮ່ທາດຮອດປີ 2030, ຮັບຮອງເອົາວິໄສທັດຮອດປີ 2040 ແລະ ຍຸດທະສາດການຄຸ້ມຄອງການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດຮອດປີ 2030, ຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໃນໄລຍະ 2020-2023, ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 4 ຫາເທື່ອທີ 5 ແລະ ແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IX, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍຈຳນວນ 10 ສະບັບ ແລະ ຮັບຮອງເອົາການແຕ່ງຕັ້ງສະມາຊິກຜູ້ພິພາກສາຂອງສານປະຊາຊົນສູງສຸດ ຈຳນວນ 4 ທ່ານ. ພ້ອມນີ້, ຍັງໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ II; ກອງປະຊຸມໄດ້ຄົ້ນຄວ້າພິຈາລະນາ ແລະ ຮັບຮອງເອົາບັນຫາພື້ນຖານຂອງແຂວງເປັນຕົ້ນ ໄດ້ພິຈາລະນາ, ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໄລຍະກາງສະໄໝຂອງແຜນການ 5 ປີ (2021-2025 ), ທິດທາງແຜນການທ້າຍສະໄໝ, ຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໄລຍະກາງສະໄໝຂອງແຜນການ 5 ປີ (2021-2025); ຮັບຮອງເອົາແຜນການພັດທະນາເສດຖະກິດ-ສັງຄົມຂອງແຂວງທ້າຍສະໄໝຮອດປີ 2025, ບັນດາຄາດໝາຍເສດຖະກິດມະຫາພາກ, ຄາດໝາຍເສດຖະກິດຂອງບັນດາຂະແໜງການ, ຄາດໝາຍວັດທະນະທຳ-ສັງຄົມ; ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023.

ພ້ອມດຽວກັນນີ້, ໄດ້ເປີດໂອກາດຮັບຟັງຄຳສະເໜີຕ່າງໆຂອງປະຊາຊົນ ເຊິ່ງຄຳສະເໜີດັ່ງກ່າວ ສສຊ ແລະ ສສຂ ຈະໄດ້ນຳໄປສະເໜີຕໍ່ຄະນະນຳຂັ້ນເທິງ ກໍຄືພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຮູ້ ແລະ ພິຈາລະນາແກ້ໄຂຕາມຄວາມເໝາະສົມໃນຕໍ່ໜ້າ.



# ກອງປະຊຸມຄະນະຊີ້ນຳໂຄງການສ້າງຄວາມເຂັ້ມແຂງ ໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ




(ສພຊ) ກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າ ສະພາແຫ່ງຊາດ ໄດ້ສົມທົບກັບໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ຈັດກອງປະຊຸມ ພາຍໃຕ້ຫົວຂໍ້ ຄະນະຊີ້ນຳໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (STEPS) ໃນວັນທີ 19 ກັນຍາ 2023 ທີ່ສະພາແຫ່ງຊາດ, ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ມີທ່ານ ປອ. ບຸນທັນ ບຸນວິໄລ ຮອງເລຂາທິການສະພາແຫ່ງຊາດ, ຫົວໜ້າກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າ, ທ່ານ ນາງ ມາຕິນ ແທເຣີ ຜູ້ຕາງໜ້າອົງການສະຫະປະຊາຊາດເພື່ອການພັດທະນາປະຈຳ ສປປ ລາວ ເຂົ້າຮ່ວມມີຫົວໜ້າກົມການເງິນ; ຕາງໜ້າຈາກກົມຮ່ວມມືສາກົນ ກະຊວງແຜນການ ແລະ ການລົງທຶນ; ຕາງໜ້າຈາກກົມ ອົງການຈັດຕັ້ງສາກົນ ກະຊວງການຕ່າງປະເທດ; ຜູ້ຕາງໜ້າອົງການພັດທະນາສາກົນປະເທດສະຫະລັດອາເມຣິກາ ປະຈຳ ສປປ ລາວ ພ້ອມດ້ວຍບັນດາທ່ານຈາກກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າ, ຄະນະເລຂາທິການສະພາແຫ່ງຊາດ, ຕາງໜ້າຈາກອົງການສະຫະປະຊາຊາດເພື່ອການພັດທະນາ ປະຈຳ ສປປ ລາວ, ພະນັກງານໂຄງການສະເຕັບ ແລະ ແຂກຖືກເຊີນເຂົ້າຮ່ວມ.



ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອທົບທວນຄືນການຈັດຕັ້ງປະຕິບັດບັນດາກິດຈະກຳ ແລະ ຜົນງານ ນັບແຕ່ກອງປະຊຸມຄະນະຊີ້ນຳໂຄງການຄັ້ງທຳອິດ ມາຮອດປັດຈຸບັນ, ແຜນວຽກປະຈຳໄຕມາດທີ 4 ປີ 2023 ແລະ ສະເໜີ ບັນດາບຸລິມະສິດ ໃນການສະໜັບສະໜູນທາງດ້ານວິຊາການ ໃນປີ 2024 ຂອງໂຄງການ. ພ້ອມທັງຮັບຟັງຜົນສຳເລັດການຈັດຕັ້ງປະຕິບັດແຜນວຽກປະຈຳ ໃນໄຕມາດທີ 1-3 ປີ 2023; ແຜນວຽກປະຈຳໄຕມາດທີ 4 ປີ 2023; ລາຍງານວຽກປົນອ້ອມ ເຊັ່ນ: ວຽກງານການເງິນ, ແຜນບຸກຄະລາກອນ, ບໍລິສັດດ້ານການຈັດການ ແລະ ວຽກງານບຸລິມະສິດ ປະຈຳປີ 2024 ແລະ ແລກປ່ຽນຄຳຖາມ ພ້ອມທັງປຶກສາຫາລືຮ່ວມກັນດ້ວຍບັນຍາກາດທີ່ດີ.

ໂອກາດດັ່ງກ່າວ, ທ່ານ ປອ. ບຸນທັນ ບຸນວິໄລ ໄດ້ສະເໜີມາຍັງບັນດາທ່ານຜູ້ເຂົ້າຮ່ວມກອງປະຊຸມ ຈົ່ງເອົາໃຈໃສ່ໃນການຕິດຕາມການລາຍງານ, ການປະກອບຄຳເຫັນ ແລະ ຖອດຖອນບົດຮຽນ ກ່ຽວກັບຜົນການຈັດຕັ້ງປະຕິບັດໂຄງການໃນໄລຍະຜ່ານມາ ພ້ອມທັງສົນທະນາແລກປ່ຽນ ກ່ຽວກັບການວາງແຜນໂຄງການໃນຕໍ່ໜ້າ ເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນຂອງການຈັດຕັ້ງປະຕິບັດເວົ້າລວມ, ເວົ້າສະເພາະ ແມ່ນການສະໜັບສະໜູນການປະຕິບັດພາລະບົດບາດອັນສິ່ງກຽດຂອງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອນຳຜົນປະໂຫຍດສູງສຸດມາໃຫ້ແກ່ປະຊາຊົນ ໂດຍຜ່ານ 3 ພາລະບົດບາດ ເຊັ່ນ: ນິຕິບັນຍັດ, ການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ການຕິດຕາມກວດກາ.

(ໄຊໂສພາພອນ ມີງມຽງຄຸນ)

# ບັນຫາທີ່ເຄັ່ງຮ້ອນ ແລະ ປະຊາຊົນສະເໜີຫຼາຍ ຕໍ່ສະມາຊິກສະພາແຫ່ງຊາດ ເຂດ 7

ທ່ານ ບຸນລ້ອນ ຊິມສີຫາປັນຍາ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງທີ 7 ຮອງປະທານສະພາປະຊາຊົນແຂວງໄຊຍະບູລີ ໄດ້ຕາງໜ້າໃຫ້ສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງທີ 7 ກໍຄືສະພາປະຊາຊົນແຂວງໄຊຍະບູລີ, ຜູ້ມີສິດເລືອກຕັ້ງພາຍໃນແຂວງໄຊຍະບູລີ ທີ່ໄດ້ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ໃຫ້ສໍາພາດກ່ຽວກັບບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນຂອງແຂວງວ່າ:

ຜ່ານການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ການຕິດຕາມກວດກາບັນຫາທີ່ເຄັ່ງຮ້ອນ ແລະ ປະຊາຊົນບັນດາເຜົ່າສະເໜີຫຼາຍກວ່າໝູ່ແມ່ນບັນຫາເງິນກີບອ່ອນຄ່າ, ລາຄາສິນຄ້າອຸປະໂພກ-ບໍລິໂພກ ໄດ້ເພີ່ມຂຶ້ນສູງ ເຊິ່ງໄດ້ກະທົບຕໍ່ຊີວິດການເປັນຢູ່ຂອງພະນັກງານ, ທະຫານ, ຕໍາຫຼວດ ແລະ ປະຊາຊົນບັນດາເຜົ່າພາຍໃນແຂວງ ເຊິ່ງໄລຍະຜ່ານມາ ທາງສູນກາງ ແລະ ທ້ອງຖິ່ນ (ລັດຖະບານ, ແຂວງ) ກໍໄດ້ມີຄວາມພະຍາຍາມສຸມໃສ່ແກ້ໄຂ ໂດຍຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ, ແຕ່ຍັງບໍ່ທັນຕອບສະໜອງໃຫ້ກັບຄວາມຕ້ອງການ ຍ້ອນການຜະລິດພາຍໃນ ເພື່ອທົດແທນການນໍາເຂົ້າບໍ່ທັນແຂງແຮງ, ສິນຄ້າເຄື່ອງອຸປະໂພກ-ບໍລິໂພກ ນັບທັງນໍ້າມັນເຊື້ອໄຟ



ສ່ວນໃຫຍ່ຍັງນໍາເຂົ້າຈາກຕ່າງປະເທດເປັນຕົ້ນຕໍ ແລະ ສະພາບການຄຸ້ມຄອງເງິນຕາຍັງບໍ່ທັນດີເທົ່າຄວນ.

ບັນຫາການປູກມັນຕົ້ນເປັນສິນຄ້າຂອງປະຊາຊົນ ໄດ້ເປັນຂະບວນກວ້າງຂວາງພໍສົມຄວນ ເຊິ່ງໄດ້ກະທົບຕໍ່ສະພາບແວດລ້ອມ, ເຮັດໃຫ້ເນື້ອທີ່ປ່າໄມ້ຈໍານວນໜຶ່ງຖືກທໍາລາຍ, ໃນປີ 2022 ມີເນື້ອທີ່ທັງໝົດ 58.874 ເຮັກຕາ, ແຕ່ປີ 2023 ມີເນື້ອທີ່ 80.630 ເຮັກຕາ, ເພີ່ມຂຶ້ນ 1,3 ເທົ່າຕົວ.

ບັນຫາການພັດທະນາພື້ນຖານໂຄງລ່າງພາຍໃນແຂວງ ເປັນຕົ້ນແມ່ນເສັ້ນທາງຫຼວງແຫ່ງຊາດ ລະຫວ່າງເມືອງໄຊຍະບູລີ ຫາເມືອງປາກລາຍ ແລະ ເມືອງໄຊຍະບູລີ ຫາເມືອງຫົງສາ ເຫັນວ່າມີການເປ່ເພຫຼາຍ ເຮັດໃຫ້ການສັນຈອນໄປ-ມາ, ການຂົນສົ່ງສິນຄ້າພົບຄວາມຫຍຸ້ງຍາກ ແລະ ຕ້ານເຈື່ອນນໍ້າເຫືອງຊາຍແດນລາວ-ໄທ ທີ່ເຫັນວ່າມີການເຊາະເຈື່ອນ ເຮັດໃຫ້ສູນເສຍເນື້ອທີ່ດິນຂອງປະເທດ.

ທ່ານໃຫ້ຮູ້ວ່າ: ວິທີການແກ້ໄຂໃນໄລຍະຜ່ານມາ ການປົກຄອງແຂວງ, ຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງທີ 7 ໄດ້ໂຄສະນາເຜີຍແຜ່ສະພາບການຂອງໂລກ ແລະ ພາກພື້ນ, ການນໍາເຂົ້ານໍ້າມັນເຊື້ອໄຟ, ວິກິດການທາງດ້ານເສດຖະກິດ-ການເງິນ, ສາເຫດພາໃຫ້ເງິນກີບອ່ອນຄ່າ, ລາຄາສິນຄ້າແພງ ແລະ ພ້ອມທັງ ຊຸກຍູ້ໃຫ້ປະຊາຊົນບັນດາເຜົ່າຜະລິດ, ຈໍາກັດ ແລະ ຫຼຸດຜ່ອນການນໍາເຂົ້າສິນຄ້າຈາກຕ່າງປະເທດ; ໄດ້ຊຸກຍູ້ພະແນກການກ່ຽວຂ້ອງລົງເກັບກໍາຂໍ້ມູນ ແລະ ມີມາດຕະການຕໍ່ຜູ້ລະເມີດ; ຈັດສັນດິນທໍາການຜະລິດໃຫ້ປະຊາຊົນ ທໍາການຜະລິດແບບຄົງທີ່ ບໍ່ຂະຫຍາຍເນື້ອທີ່, ໃຫ້ປະຊາຊົນປັບປຸງດິນໂດຍນໍາໃຊ້ຝຸ່ນຊີວະພາບ ແລະ ອື່ນໆ ເພື່ອເພີ່ມຜົນຜະລິດ; ຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງທີ 7 ໄດ້ລົງຕິດຕາມ, ກວດກາ ແລະ ຊຸກຍູ້ຂະແໜງການກ່ຽວຂ້ອງ ປັບປຸງແກ້ໄຂບ່ອນທີ່ຈໍາເປັນ ເປັນຕົ້ນ ແມ່ນສ້ອມແປງສຸກເສີນ ເພື່ອອໍານວຍຄວາມສະດວກໃນການສັນຈອນໄປ-ມາ; ກ່ຽວກັບການປ້ອງກັນຕາຝັ່ງເຈື່ອນ ສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ ໄດ້ຊຸກຍູ້ອົງການປົກຄອງແຂວງ, ກະຊວງກ່ຽວຂ້ອງ ຈັດສັນງົບປະມານເຂົ້າໃນການກໍ່ສ້າງໃນແຕ່ລະປີຕາມຄວາມອາດສາມາດຂອງງົບປະມານ.

# ສສຊ ແລະ ສສຂ ເຜີຍແຜ່ຜົນສໍາເລັດ ສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຢູ່ນະຄອນໄກສອນພົມວິຫານ




(ສພຊ) ເພື່ອເປັນການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ບັນດາເນື້ອໃນສໍາຄັນຕ່າງໆທີ່ລັດຖະບານສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ແລະ ເນື້ອໃນຜົນສໍາເລັດຂອງກອງປະຊຸມສະພາປະຊາຊົນແຂວງສະຫວັນນະເຂດໃຫ້ຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ແລະເຂົ້າໃຈ ທັງເປັນການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ເພື່ອເປັນການລົງເກັບກໍາຄໍາຄິດເຫັນຕໍ່ວຽກງານການຄຸ້ມຄອງບໍລິຫານລັດ ດັ່ງນັ້ນ, ໃນລະຫວ່າງວັນທີ 12-13 ກັນຍາ 2023 ທ່ານ ພອນສານ ວິໄລເມັ້ງ ສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ IX ປະຈໍາເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ, ຮອງປະທານຄະນະບໍລິຫານງານສູນກາງສະຫະພັນກໍາມະບານລາວ, ທ່ານ ພູທອນ ພຸດທະຂັນຕີ ເລຂາທິການສະພາປະຊາຊົນແຂວງ ທັງເປັນສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ II ປະຈໍາເຂດເລືອກຕັ້ງນະຄອນໄກສອນພົມວິຫານ ພ້ອມດ້ວຍບັນດາທ່ານ ສສຂ ປະຈໍາເຂດເລືອກຕັ້ງນະຄອນໄກສອນ ພົມວິຫານ ໄດ້ເຄື່ອນໄຫວພົບປະເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ຢູ່ນະຄອນໄກສອນ ພົມວິຫານ ໂດຍການຕ້ອນຮັບຂອງທ່ານ ສົມໝາຍ ສິງວິໄລ ກໍາມະການຄະນະປະຈໍາພັກນະຄອນ, ຮອງເຈົ້ານະຄອນໄກສອນ ພົມວິຫານ ພ້ອມດ້ວຍບັນດາທ່ານຄະນະພັກນະຄອນ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ກໍາລັງ ປກຊ-ປກສ, ພະນັກງານ-ລັດຖະກອນ, ອໍານາດການປົກຄອງບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນພາຍໃນເທສະບານນະຄອນໄກສອນ ພົມວິຫານ ເຂົ້າຮ່ວມຢ່າງພ້ອມພຽງ.

ການເຄື່ອນໄຫວພົບປະເຜີຍແຜ່ຄັ້ງນີ້ ແມ່ນໄດ້ລົງຢູ່ 3 ຈຸດຄື: ຈຸດທີ 1 ກຸ່ມບ້ານທີ 10 ບ້ານໂພນສີມ, ຈຸດທີ 2 ກຸ່ມບ້ານພັດທະນາທີ 4 ບ້ານອຸດົມວິໄລ ແລະ ຈຸດທີ 3 ຢູ່ສະໂມສອນຫ້ອງວ່າການນະຄອນໄກສອນ ພົມວິຫານ ເຊິ່ງໃນແຕ່ລະຈຸດ ບັນດາທ່ານ ສສຊ ແລະ ສສຂ ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານການນໍາພາ-ຊີ້ນໍາວຽກງານຂອງການປົກຄອງບັນດາບ້ານດັ່ງກ່າວ ພ້ອມທັງຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງນະຄອນໄກສອນ ພົມວິຫານໂດຍຫຍໍ້. ຈາກນັ້ນ, ບັນດາທ່ານ ສສຊ, ສສຂ ກໍໄດ້ຜັດປ່ຽນກັນເຜີຍແຜ່ເນື້ອໃນຜົນສໍາເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ໃຫ້ພໍ່ແມ່ປະຊາຊົນ ກໍຄືຜູ້ມີສິດເລືອກຕັ້ງໄດ້ຮັບຮູ້. ພ້ອມນັ້ນ, ຍັງໄດ້ເປີດໂອກາດໃຫ້ການປົກຄອງ ຕະຫຼອດຮອດພໍ່ແມ່ປະຊາຊົນໄດ້ຊັກຖາມ ແລະ ມີຄໍາສະເໜີ ໂດຍສະເພາະແມ່ນບັນຫາການພັດທະນາພື້ນຖານໂຄງລ່າງ ໃນນັ້ນ, ການແກ້ໄຂບັນຫາປາກົດການຫຍໍ້ທໍ້ໃນສັງຄົມ, ບັນຫາຢາເສບຕິດ, ບັນຫາທີ່ດິນ ແລະ ລະບົບຊົນລະປະທານເໝືອງຝາຍທີ່ຈະນໍາໃຊ້ເຂົ້າໃນການຜະລິດຂອງພໍ່ແມ່ປະຊາຊົນ ເພື່ອເປັນການແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.

ໂອກາດດັ່ງກ່າວ, ສສຊ ແລະ ສສຂ ຍັງໄດ້ມີຄໍາເຫັນຫຼາຍດ້ານຕໍ່ກັບການພັດທະນາພື້ນຖານໂຄງລ່າງ, ການພັດທະນາທາງດ້ານເສດຖະກິດ-ສັງຄົມ, ການແກ້ໄຂບັນຫາຢາເສບຕິດ ໂດຍຕິດພັນກັບ 2 ວາລະແຫ່ງຊາດຂອງລັດຖະບານ ແນໃສ່ໃຫ້ບັນລຸໄດ້ຕາມລະດັບຄາດໝາຍທີ່ພັກ-ລັດວາງໄວ້ ທັງໄດ້ຕອບບັນຫາຄໍາສະເໜີຂອງພໍ່ແມ່ປະຊາຊົນ ເພື່ອໃຫ້ຮັບຮູ້ ແລະ ເຂົ້າໃຈເຖິງບັນຫາຕ່າງໆຕໍ່ກັບສະພາບການອັນລວມໃນການພັດທະນາຂອງປະເທດເຮົາໃນໄລຍະປັດຈຸບັນ ແລະ ໄດ້ຮັບເອົາຄໍາສະເໜີຂອງການປົກຄອງບ້ານ, ພໍ່ແມ່ປະຊາຊົນ ໄປນໍາສະເໜີຕໍ່ຂະແໜງການກ່ຽວຂ້ອງ ເພື່ອນໍາໄປປຶກສາຫາລື ແລະ ຄົ້ນຄວ້າແກ້ໄຂໃນຂັ້ນຕໍ່ໄປ.

**(ນາງ ຄອນສະຫວັນ ເມກສະຫວັນ)**

# ສະພາປະຊາຊົນແຂວງຄໍາມ່ວນ ປາຖະກະຖາເລົ່າມູນເຊື້ອສໍາຄັນປະຫວັດສາດຂອງຊາດ



(ສພຊ) ສະພາປະຊາຊົນແຂວງຄໍາມ່ວນ ໄດ້ຈັດພິທີປາຖະກະຖາເຜີຍແຜ່ມູນເຊື້ອວັນຍຶດອໍານາດ ຄົບຮອບ 48 ປີ, ວັນລັດຖະທໍາມະນູນແຫ່ງ ສປປ ລາວ ຄົບຮອບ 32 ປີ ແລະ ວັນສ້າງຕັ້ງສະພາປະຊາຊົນ ຄົບຮອບ 45 ປີ ໃນຕອນເຊົ້າຂອງວັນທີ 19 ກັນຍາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຄໍາມ່ວນ ໂດຍການປາຖະກະຖາຂອງທ່ານ ນາງ ບັງອອນ ໄຊຍະສິດ ກໍາມະການປະຈໍາພັກແຂວງ, ຮອງປະທານສະພາປະຊາຊົນແຂວງຄໍາມ່ວນ; ເຂົ້າຮ່ວມມີບັນດາທ່ານຄະນະປະຈໍາສະພາປະຊາຊົນແຂວງຄໍາມ່ວນ, ຄະນະກໍາມະການ-ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫຼອດຮອດພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງຄໍາມ່ວນ.

ໃນພິທີ, ທ່ານ ນາງ ບັງອອນ ໄຊຍະສິດ ໄດ້ປາຖະກະຖາມູນເຊື້ອວັນຍຶດອໍານາດທົ່ວປະເທດ ສປປ ລາວ ຄົບຮອບ 78 ປີ (23/8/1945-23/8/2023) ເຊິ່ງທ່ານໄດ້ໃຫ້ຮູ້ວ່າ: ວັນຍຶດອໍານາດ 23 ສິງຫາແມ່ນວັນປະຫວັດສາດຂອງຊາດລາວເຮົາ ທີ່ມີຄວາມໝາຍຄວາມສໍາຄັນຫຼາຍສໍາລັບປະຊາຊົນລາວທັງຊາດ. ຕົ້ນສະຕະວັດທີ XX ພວກຈັກກະພັດຕ່າງດ້າວໄດ້ດໍາເນີນການຮຸກຮານ ແລະ ຍຶດຄອງບັນດາປະເທດເປັນຫົວເມືອງຂຶ້ນ ແລະ ປະເທດລາວໄດ້ຕົກເປັນຫົວເມືອງຂຶ້ນຂອງຈັກກະພັດແບບເກົ່າ ໃນປີ 1893; ປະຊາຊົນລາວບັນດາເຜົ່າໄດ້ຈົມຢູ່ໃນຄວາມເປັນຂ້ອຍຂ້າຂອງພວກລ່າເມືອງຂຶ້ນຕ່າງດ້າວ ແລະ ຖືກຂູດຣີດຢ່າງແສນສາຫັດ ເຖິງຢ່າງໃດກໍຕາມ, ຍ້ອນນໍ້າໃຈຮັກຊາດ ຄຽດແຄ້ນຕໍ່ການຮຸກຮານ ແລະ ການກົດຂີ່ຂູດຮີດຂອງພວກລ່າເມືອງຂຶ້ນ, ປະຊາຊົນລາວບັນດາເຜົ່າ ຈຶ່ງໄດ້ລຸກຮື້ຂຶ້ນຕໍ່ສູ້ເພື່ອທວງເອົາຄວາມເປັນເອກະລາດ, ສິດເສລີພາບ ແລະ ຄວາມຢູ່ດີກິນດີຂອງຕົນ. ຂະບວນການທໍາອິດແມ່ນເລີ່ມຈາກການລຸກຮື້ຂຶ້ນຕ້ານກັບພວກລ່າເມືອງຂຶ້ນແບບເກົ່າຂອງປະຊາຊົນແຂວງສະຫວັນນະເຂດ ພາຍໃຕ້ການນໍາພາຂອງພໍ່ກະດວດຜູ້ຮັກຊາດ ໃນປີ 1901, ປີ 1916 ພາຍໃຕ້ການນໍາພາຂອງເຈົ້າຟ້າເມືອງສິງ, ປີ 1920 ຂະບວນການຕໍ່ສູ້ຂອງນາຍຖູຄໍາ ຢູ່ວຽງຈັນ, ຂະບວນການຕໍ່ສູ້ພາຍໃຕ້ການນໍາພາຂອງເຈົ້າຟ້າປັດໃຈ ປີ 1918-1922 ແລະ ຂະບວນການອື່ນໆ, ໃນໄລຍະຕໍ່ມາ. ວັນຍຶດອໍານາດ 23/8/1975 ແມ່ນມີຄວາມໝາຍສໍາຄັນຫຼາຍ ເຊິ່ງມັນແມ່ນໝາກຜົນແຫ່ງການຕໍ່ສູ້ປະຕິວັດອັນຍືດເຍື້ອຍາວນານຂອງປະຊາຊົນລາວບັນດາເຜົ່າ ພາຍໃຕ້ການນໍາພາຂອງພັກ ແມ່ນຜົນທີ່ເກີດຈາກຄວາມກ້າຫານປະດິດສ້າງແຫ່ງການນໍາໃຊ້ 3 ບາດຄ້ອນຍຸດທະສາດ ເພື່ອຍຶດອໍານາດການປົກຄອງໃນປະເທດແບບບົວບໍ່ຊໍ້ານໍ້າບໍ່ຂຸ່ນ. ພ້ອມນີ້, ຍັງແມ່ນໄຊຊະນະຂອງແນວທາງປະຕິວັດອັນຖືກຕ້ອງ ແລະ ການນໍາພາທີ່ສະຫຼາດສ່ອງໃສຂອງພັກ, ແມ່ນໄຊຊະນະຂອງກໍາລັງແຮງແຫ່ງຄວາມສາມັກຄີເປັນຈິດໜຶ່ງໃຈດຽວກັນຂອງທົ່ວປວງຊົນທັງຊາດ, ຄວາມເປັນອັນໜຶ່ງອັນດຽວກັນຂອງກອງທັບ ແລະ ປະຊາຊົນລາວບັນດາເຜົ່າ. ພ້ອມນີ້, ທ່ານຍັງໄດ້ກ່າວຕື່ມອີກວ່າ ເພື່ອສືບຕໍ່ເສີມຂະຫຍາຍມູນເຊື້ອ 23 ສິງຫາ ເຂົ້າໃນການພັດທະນາປະເທດຊາດ ຍິ່ງຕ້ອງເພີ່ມທະວີການສຶກສາອົບຮົມປະຊາຊົນລາວບັນດາເຜົ່າ ເປັນຕົ້ນຄົນຮຸ່ນໜຸ່ມໃຫ້ມີຄວາມຮັບຮູ້, ເຂົ້າໃຈກ່ຽວກັບມູນເຊື້ອ 23 ສິງຫາ ດ້ວຍຮູບການຕ່າງໆໃຫ້ກວ້າງຂວາງເລິກເຊິ່ງ, ຕັ້ງໜ້າປັບປຸງຮັດແໜ້ນຄວາມສາມັກຄີປອງດອງທົ່ວປວງຊົນ ພາຍໃຕ້ຮົ່ມທຸງຂອງພັກ, ຍົກສູງສະຕິລະວັງຕົວຕໍ່ກົນອຸບາຍຫັນປ່ຽນໂດຍສັນຕິຂອງພວກຄົນບໍ່ດີ, ເອົາໃຈໃສ່ຕ້ານ ແລະ ສະກັດກັ້ນສິ່ງຫຍໍ້ທໍ້ຕ່າງໆໃນສັງຄົມ ເພີ່ມທະວີການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍໃຫ້ມີຄວາມສັກສິດ, ເຊີດຊູນໍ້າໃຈເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ເພື່ອພັດທະນາຕົນເອງ, ຄອບຄົວ ແລະ ປະເທດຊາດຫຼຸດພົ້ນອອກຈາກຄວາມທຸກຍາກ.

ໃນພິທີ, ທ່ານ ຄໍາສຸກ ວັນທະວົງສາ ຄະນະປະຈໍາສະພາປະຊາຊົນແຂວງ ກໍໄດ້ຂຶ້ນປາຖະກະຖາວັນລັດຖະທໍາມະນູນແຫ່ງ ສປປ ລາວ ຄົບຮອບ 32 ປີ (15 ສິງຫາ 1991-15 ສິງຫາ 2023) ແລະ ທ່ານ ສະເຫຼີກສັກ ແກ້ວຈັນທະລາ ຄະນະປະຈໍາສະພາປະຊາຊົນແຂວງ ໄດ້ເລົ່າມູນເຊື້ອວັນສ້າງຕັ້ງສະພາປະຊາຊົນ ຄົບຮອບ 45 ປີ (4 ສິງຫາ 1978-4 ສິງຫາ 2023).

# ບັນຫາທີ່ຕ້ອງໄດ້ຮີບຮ້ອນຈັດຕັ້ງປະຕິບັດ ແລະ ແກ້ໄຂຂອງແຂວງຫົວພັນ



ໃນໂອກາດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ທ່ານ ສີຄຳ ບຸນມີໄຊ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ, ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໄດ້ໃຫ້ສຳພາດກ່ຽວກັບບັນຫາທີ່ຕ້ອງໄດ້ຮີບຮ້ອນຈັດຕັ້ງປະຕິບັດ ແລະ ແກ້ໄຂ ເປັນຕົ້ນແມ່ນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍແກ້ໄຂບັນຫາຢາເສບຕິດ ໃນໄລຍະຜ່ານມາຍັງເຫັນວ່າບໍ່ທັນເຮັດໄດ້ດີເທົ່າທີ່ຄວນ ເຊັ່ນ: ການເຂົ້າເຖິງຜູ້ເສບ ແລະ ຜູ້ຂາຍທີ່ເປັນລາຍໃຫຍ່ຢູ່ບາງບ່ອນຍັງມີການເຊື່ອງອຳ, ປົກປິດ ຜູ້ກະທຳຜິດບໍ່ກ້າລາຍງານ, ປະຊາຊົນ ແລະ ຜູ້ປົກຄອງຈຳນວນໜຶ່ງ ບໍ່ທັນໃຫ້ຄວາມຮ່ວມມືເທົ່າທີ່ຄວນ ຈຶ່ງເຮັດໃຫ້ປາກົດການຫຍໍ້ທໍ້ບາງດ້ານມີທ່າອ່ຽງເພີ່ມຂຶ້ນ ເຊັ່ນ: ການເສບ, ຊື້-ຂາຍຢາເສບຕິດ ແລະ ອື່ນໆ.

ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ຍັງບໍ່ທັນໄດ້ດີ, ບໍ່ເຂັ້ມງວດ, ບໍ່ເດັດຂາດ. ຈັງຫວະການເຕີບໂຕທາງດ້ານເສດຖະກິດບໍ່ທັນແຂງແຮງເທົ່າທີ່ຄວນ ເປັນຕົ້ນແມ່ນການກຳນົດຖານລາຍຮັບທີ່ໝັ້ນຄົງບໍ່ທັນມີຈຸດສຸມ, ການນຳໃຊ້ 5 ທ່າແຮງຂອງແຂວງ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມຍັງບໍ່ທັນແຂງແຮງ, ການສ້າງຈຸດສຸມບໍ່ທັນກາຍເປັນຕົວແບບແທ້, ການແກ້ໄຂຄວາມທຸກຍາກບໍ່ບັນລຸຕາມຄາດໝາຍ ຍັງມີລັກສະນະເພີ່ມຂຶ້ນ, ການຄຸ້ມຄອງ, ການນຳໃຊ້ພື້ນຖານໂຄງລ່າງທີ່ມີແລ້ວ ເພື່ອນຳໃຊ້ໃຫ້ເກີດປະໂຫຍດສູງສຸດແກ່ປະຊາຊົນຍັງບໍ່ມີປະສິດທິຜົນ, ການສົ່ງເສີມການປູກຫຍ້າລ້ຽງສັດໄດ້ຂະຫຍາຍອອກຢ່າງກວ້າງຂວາງ ແຕ່ບໍ່ໄດ້ວາງມາດຕະການເຂັ້ມງວດໃນການຄຸ້ມຄອງເຮັດໃຫ້ປ່າໄມ້ຖືກທຳລາຍໜັກໜ່ວງໂດຍບໍ່ຄຳນຶງເຖິງໄລຍະຍາວ; ການຄຸ້ມຄອງບັນດາໂຄງການຂຸດຄົ້ນແຮ່ທາດ, ເຂື່ອນໄຟຟ້າບໍ່ທັນມີປະສິດທິຜົນ ເຊິ່ງໄດ້ສົ່ງຜົນກະທົບຕໍ່ທຳມະຊາດ ແລະ ສັງຄົມ ເປັນຕົ້ນແມ່ນພືດພັນທັນຍາຫານ, ທີ່ຢູ່ອາໄສ, ເຂດທຳການຜະລິດຂອງປະຊາຊົນຖືກທຳລາຍ, ແມ່ນ້ຳບົກແຫ້ງ, ມີສານພິດເຈືອປົນ ເຮັດໃຫ້ປາຕາຍເປັນຈຳນວນຫຼວງຫຼາຍຢູ່ໃນຂອບເຂດໂຄງການຂຸດຄົ້ນ, ປຸງແຕ່ງແຮ່ ແລະ ໂຄງການກໍ່ສ້າງເຂື່ອນໄຟຟ້າຈຳນວນໜຶ່ງ;

ນອກຈາກນັ້ນ, ຍັງມີຫຼາຍໂຄງການທີ່ສົ່ງຜົນກະທົບຕໍ່ທຳມະຊາດ ແລະ ການດຳລົງຊີວິດຂອງປະຊາຊົນ ເຊິ່ງການຈັດຕັ້ງປະຕິບັດບັນດາໂຄງການໃນໄລຍະຜ່ານມາເຫັນວ່າບໍ່ຖືກຕາມຂັ້ນຕອນໂດຍສະເພາະໂຄງການທີ່ໄດ້ຮັບອະນຸຍາດເຮັດແບບທົດລອງ, ບໍ່ມີການສຳຫຼວດ ແລະ ເກັບກຳຂໍ້ມູນຈະແຈ້ງ, ບໍ່ມີໃບຢັ້ງຢືນຮັບຮອງກ່ຽວກັບສິ່ງແວດລ້ອມ, ການຈັດຕັ້ງປະຕິບັດບໍ່ໄປຕາມສັນຍາ, ການຄຸ້ມຄອງໂຄງການລົງທຶນຂອງລັດ ຈຳນວນໜຶ່ງຍັງບໍ່ທັນສູງ ແລະ ນິຕິກຳກ່ຽວຂ້ອງຍັງບໍ່ທັນຮັດກຸມເທົ່າທີ່ຄວນ, ບາງໂຄງການຈັດຕັ້ງປະຕິບັດໄປກ່ອນຈິ່ງປະກອບເອກະສານຕາມຫຼັງ ເມື່ອພົບບັນຫາ ຈຶ່ງສະເໜີໃຫ້ສະພາປະຊາຊົນຂັ້ນແຂວງ ລົງຕິດຕາມກວດກາ ເຊິ່ງມີຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດ.

ທ່ານ ສີຄຳ ບຸນມີໄຊ ໄດ້ໃຫ້ຮູ້ວ່າ: ບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນພາຍໃນແຂວງ ໃນນາມຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງກໍຄືຄະນະປະຈຳສະພາປະຊາຊົນແຂວງ ໄດ້ມີແຜນວິທີການແກ້ໄຂຄື: ໄດ້ປະສານສົມທົບກັບອົງການປົກຄອງແຂວງ, ເມືອງ ກໍຄືພາກສ່ວນກ່ຽວຂ້ອງຈັດກອງປະຊຸມຮ່ວມເພື່ອຄົ້ນຄວ້າປຶກສາຫາລື ແລະ ແກ້ໄຂແຕ່ລະບັນຫາໄປຕາມຂັ້ນຕອນ ເພື່ອໃຫ້ມີຄວາມສອດຄ່ອງກັບສະພາບຄວາມເປັນຈິງຂອງທ້ອງຖິ່ນ ແລະ ຖືກຕ້ອງຕາມກົດໝາຍ; ໄດ້ແຕ່ງຕັ້ງຄະນະທີມງານລົງຕິດຕາມກວດກາເກັບກຳຂໍ້ມູນຕົວຈິງ ເພື່ອເປັນຂໍ້ມູນ ໂດຍມອບໃຫ້ຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງແຂວງ ແກ້ໄຂຕາມຄວາມເໝາະສົມ; ສະເໜີໃຫ້ລັດຖະບານອອກນິຕິກຳໃຕ້ກົດໝາຍໃຫ້ຮັດກຸມ, ເຂັ້ມງວດຕື່ມ ໃນການຄຸ້ມຄອງການສຳຫຼວດ, ຂຸດຄົ້ນ ແລະ ສົ່ງອອກແຮ່ທາດ, ການສ້າງເຂື່ອນໄຟຟ້າທີ່ສົ່ງຜົນກະທົບຕໍ່ທຳມະຊາດ ແລະ ສັງຄົມ; ເອົາໃຈໃສ່ໃນການໂຄສະນາເຜີຍແຜ່ກົດໝາຍໃຫ້ປະຊາຊົນໄດ້ຮັບຮູ້ ຢ່າງກວ້າງຂວາງ, ທົ່ວເຖິງ ແລະ ເລິກເຊິ່ງ; ປຸກລະດົມປະຊາຊົນ ແລະ ສັງຄົມ ໃຫ້ມີສ່ວນຮ່ວມຫຼາຍຂຶ້ນໃນການຕິດຕາມກວດກາ ຕາມລັດຖະທຳມະນູນ ແລະ ກົດໝາຍ.

ໂອກາດດັ່ງກ່າວ, ທ່ານ ຍັງຝາກເຖິງພໍ່ແມ່ປະຊາຊົນບັນດາເຜົ່າພາຍໃນແຂວງເວົ້າສະເພາະ ເວົ້າລວມກໍຄືປະຊາຊົນບັນດາເຜົ່າໃນທົ່ວປະເທດ ໃນນາມຂ້າພະເຈົ້າຕາງໜ້າຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ຂໍຮຽກຮ້ອງມາຍັງອົງການຈັດຕັ້ງພັກ, ລັດ ແລະ ສັງຄົມ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າທົ່ວປະເທດເວົ້າລວມ ເວົ້າສະເພາະປະຊາຊົນແຂວງຫົວພັນ ຈົ່ງໄດ້ເປັນເຈົ້າການ, ມີສ່ວນຮ່ວມໃນການຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ-ແຜນເງິນຕາ ຕິດພັນກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດຢູ່ແຂວງ,ເມືອງ ກໍຄືຢູ່ພາຍໃນທ້ອງຖິ່ນຂອງຕົນເອງ ໃຫ້ແຂງແຮງເລິກເຊິ່ງຮອບດ້ານ ແລະ ມີປະສິດທິຜົນ, ເພື່ອພ້ອມກັນຕ້ານບັນຫາປາກົດການຫຍໍ້ທໍ້ຕ່າງໆຢູ່ໃນສັງຄົມໃຫ້ໝົດໄປ.



# ທາບທາມຮອງເລຂາທິການສະພາປະຊາຊົນແຂວງ ແລະ ດຳເນີນກອງປະຊຸມກາງສະໄໝຂອງໜ່ວຍພັກ




(ສພຊ) ກອງປະຊຸມທາບທາມບຸກຄະລາກອນຂອງສະພາປະຊາຊົນແຂວງ ທີ່ຈະດຳລົງຕຳແໜ່ງເປັນຮອງເລຂາທິການສະພາປະຊາຊົນແຂວງ ເມື່ອວັນທີ 18 ກັນຍາ 2023 ໂດຍການເປັນປະທານຂອງທ່ານ ຄຳຟອງ ອິນມານີ ປະທານສະພາປະຊາຊົນແຂວງຫຼວງນ້ຳທາ; ເຂົ້າຮ່ວມມີຄະນະປະຈຳສະພາປະຊາຊົນແຂວງ ຄະນະຈັດຕັ້ງແຂວງ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນກອງປະຊຸມໄດ້ຮັບຟັງການຜ່ານດຳລັດຂອງລັດຖະບານເລກທີ 461/ສພຊ, ລົງວັນທີ 6 ຕຸລາ 2012 ວ່າດ້ວຍມາດຕະຖານຕຳແໜ່ງບໍລິຫານຂອງລັດຖະກອນ ແຫ່ງ ສປປ ລາວ; ຈາກນັ້ນ, ທ່ານ ຄຳຟອງ ອິນມານີ ໄດ້ມີຄຳເຫັນຕໍ່ພະນັກງານ-ລັດຖະກອນ ໃນການທາບທາມບຸກຄະລາກອນຂອງສະພາປະຊາຊົນແຂວງ ທີ່ຈະດຳລົງຕຳແໜ່ງເປັນຮອງເລຂາທິການສະພາປະຊາຊົນແຂວງ ຕ້ອງທາບທາມເອົາບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດ, ມາດຖານເງື່ອນໄຂທີ່ຄົບຖ້ວນແທ້ ແລະ ໃຫ້ມີຄວາມຍຸຕິທຳໃນການທາບທາມ ເພື່ອໃຫ້ໄດ້ບຸກຄະລາກອນທີ່ມາຊີ້ນຳວຽກງານຮອງເລຂາທິການໃຫ້ດີຂຶ້ນເປັນກ້າວໆ.

ພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງ ໄດ້ທາບທາມເອົາບຸກຄະລາກອນຂອງສະພາປະຊາຊົນແຂວງ ທີ່ຈະດຳລົງຕຳແໜ່ງເປັນຮອງເລຂາທິການສະພາປະຊາຊົນແຂວງ ເຊິ່ງບຸກຄະລາກອນນຳມາທາບທາມຄັ້ງນີ້ ມີທັງໝົດ 7 ທ່ານ ຍິງ 2 ທ່ານ ແລະ ໃຫ້ເລືອກເອົາ 1 ທ່ານ ເພື່ອດຳລົງຕຳແໜ່ງຮອງເລຂາທິການສະພາປະຊາຊົນແຂວງ.

ໃນວັນຕໍ່ມາ, ໜ່ວຍພັກສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ເປີດກອງປະຊຸມກາງສະໄໝຂຶ້ນທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ ໂດຍການເປັນປະທານຂອງສະຫາຍ ນາງ ອຸ່ນຫຼ້າ ອ້ຽງລໍລາດ ກຳມະການພັກແຂວງ, ເລຂາໜ່ວຍພັກສະພາປະຊາຊົນແຂວງ, ຮອງປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມໂດຍສະຫາຍ ວຽງສະຫວັດ ສີພັນດອນ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງຫຼວງນ້ຳທາ, ມີຮອງເລຂາໜ່ວຍພັກ, ຄະນະໜ່ວຍພັກ, ຮອງປະທານຄະນະກວດກາລັດແຂວງ, ຄະນະຈັດຕັ້ງແຂວງ, ພ້ອມດ້ວຍສະມາຊິກພັກສົມບູນ ແລະ ສຳຮອງ ພາຍໃນໜ່ວຍ.

ໃນກອງປະຊຸມ, ໄດ້ຮັບຟັງບົດສະຫຼຸບການຈັດຕັ້ງປະຕິບັດວຽກງານກາງສະໄໝ (2021-2023)ແລະ ແຜນການວຽກງານຈຸດສຸມທ້າຍສະໄໝ (2023-2025) ຂອງໜ່ວຍພັກສະພາປະຊາຊົນແຂວງ ເຊິ່ງໃນໄລຍະສອງປີເຄິ່ງຜ່ານມາ ໂດຍຄະນະໜ່ວຍພັກ ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ພະນັກງານ-ສະມາຊິກພັກ, ດ້ວຍຫຼາຍຮູບ, ຫຼາຍສີ ທັງລວງກວ້າງ ແລະ ລວງເລິກ. ພ້ອມນັ້ນ, ຄະນະພັກໄດ້ຜ່ານບົດສຳຫຼວດຕົນເອງ ພ້ອມທັງໄດ້ປ່ອນບັດປະເມີນຕີລາຄາຈັດແບ່ງປະເພດຂອງຄະນະພັກໃນການນຳພາ-ຊີ້ນຳ, ຈັດຕັ້ງປະຕິບັດວຽກງານຮອບດ້ານກາງສະໄໝ.

ໃນຕອນທ້າຍ, ສະຫາຍ ວຽງສະຫວັດ ສີພັນດອນ ໄດ້ມີຄຳເຫັນໂອ້ລົມ ແລະ ເນັ້ນໜັກ ໂດຍທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານໃນໄລຍະຜ່ານມາຂອງຄະນະໜ່ວຍພັກຂອງສະພາປະຊາຊົນແຂວງ ພ້ອມທັງສະເໜີໃຫ້ຄະນະໜ່ວຍພັກ ນຳພາສະມາຊິກພັກ-ພະນັກງານ, ລັດຖະກອນ ພາຍໃນສະພາປະຊາຊົນແຂວງ ຈັດຕັ້ງປະຕິບັດເນື້ອໃນກອງປະຊຸມ ຕິດພັນກັບການສ້າງຂະບວນການ, ສ້າງຜົນງານຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ 3 ຂັ້ນຂອງພັກທີ່ຈະໄຂຂຶ້ນໃນຕໍ່ໜ້ານີ້, ສືບຕໍ່ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ແກ່ພະນັກງານ-ສະມາຊິກພັກຢ່າງເປັນປົກກະຕິຕໍ່ເນື່ອງ ໃຫ້ກຳໄດ້ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ມະຕິຄຳສັ່ງຕ່າງໆຂອງຂັ້ນເທິງ ເພື່ອເຮັດໃຫ້ສະມາຊິກພັກພາຍໃນໜ່ວຍ ມີຄຸນທາດການເມືອງໜັກແໜ້ນ, ມີຄວາມຮູ້ທາງດ້ານທິດສະດີການເມືອງ, ມີຄວາມຮູ້-ຄວາມສາມາດໃນວຽກງານວິຊາສະເພາະທີ່ຕົນເອງຮັບຜິດຊອບ, ມີນ້ຳໃຈຮັກຊາດ, ຮັກລະບອບໃໝ່, ມີທັດສະນະຮັບໃຊ້ປະຊາຊົນຢ່າງຖືກຕ້ອງ, ກ້າຄິດ, ກ້າເຮັດ, ກ້າຮັບຜິດຊອບ ແລະຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງ ໃຫ້ກາຍເປັນສະມາຊິກພັກ, ພະນັກງານຜູ້ສືບທອດທີ່ດີຂອງພັກ ແລະ ຂອງປະຊາຊົນ; ຄະນະໜ່ວຍພັກ ຕ້ອງສືບຕໍ່ນຳພາວຽກງານວິຊາສະເພາະໃຫ້ດີ, ປະຕິບັດ 3 ພາລະບົດບາດຂອງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ໃນການສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ, ການພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງຊາດ, ຂອງທ້ອງຖິ່ນ, ເອົາໃຈໃສ່ປັບປຸງແບບແຜນວິທີເຮັດວຽກ, ວິທີນຳພາໃຫ້ດີ, ປະຕິບັດຕາມຫຼັກການລວມສູນ ປະຊາທິປະໄຕ ຢ່າງເຂັ້ມງວດ, ພ້ອມກັນສະກັດກັ້ນຕີຖອຍປາກົດການຫຍໍ້ທໍ້ຕ່າງໆໃນຖັນແຖວສະມາຊິກພັກ, ພະນັກງານ ສ້າງໃຫ້ມີການຫັນປ່ຽນໃໝ່ ແລະ ຍາດໄດ້ຜົນງານຍິ່ງໃຫຍ່ກວ່າເກົ່າ.

**(ອຳພອນ ສີປະເສີດ)**

# ສສຊ, ສສຂ ໄຊສົມບູນ ເຄື່ອນໄຫວວຽກງານຢູ່ເມືອງລ້ອງແຈ້ງ



(ສພຊ) ສະພາປະຊາຊົນແຂວງໄຊສົມບູນ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງໄຊສົມບູນ ຊຸດທີ II ຢູ່ທີ່ເມືອງລ້ອງແຈ້ງ ແຂວງໄຊສົມບູນ ນຳໂດຍທ່ານ ແດງ ປະທຸມທອງ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18, ປະທານສະພາປະຊາຊົນແຂວງໄຊສົມບູນ, ທ່ານ ພັທ. ຄຳໝັ້ນ ພົມມະວົງສາ ສະມາຊິກສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການຍຸດຕິທຳ ແລະ ປກຊ-ປກສ ພ້ອມດ້ວຍພະນັກງານວິຊາການສະພາປະຊາຊົນແຂວງ.

ທັງນີ້, ກໍເພື່ອປະຕິບັດຕາມລັດຖະທຳມະນູນ ແລະ ກົດໝາຍ ທັງເປັນການຍົກສູງພາລະບົດບາດຂອງສະມາຊິກສະພາແຫ່ງຊາດ ໃນນາມຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດທີ່ປະຕິບັດໜ້າທີ່ຢູ່ທ້ອງຖິ່ນ ແລະ ຍົກສູງພາລະບົດບາດຂອງສະພາປະຊາຊົນແຂວງ ກໍຄືສະມາຊິກສະພາປະຊາຊົນແຂວງປະຈຳບັນດາເມືອງ ໃຫ້ຜູ້ມີສິດເລືອກຕັ້ງ ກໍຄືພໍ່ແມ່ປະຊາຊົນໄດ້ເຂົ້າໃຈເລິກເຊິ່ງຕື່ມ ແລະ ເພື່ອໃຫ້ບັນດາອົງການຈັດຕັ້ງລັດ ແລະ ເອກະຊົນ ຕະຫຼອດຮອດຜູ້ມີສິດເລືອກຕັ້ງພາຍໃນແຂວງໄຊສົມບູນ ໄດ້ຮັບຟັງຜົນສຳເລັດຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຂອງແຂວງໃນໄລຍະຜ່ານມາ ແລະ ໄດ້ຮັບຮູ້ທິດທາງແຜນການເຄື່ອນໄຫວໃນຕໍ່ໜ້າຂອງຊາດ ກໍຄືຂອງແຂວງ.

ໃນໂອກາດນີ້, ສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ໄດ້ເຜີຍແຜ່ບັນດາເນື້ອໃນເອກະສານຕ່າງໆ ແລ້ວ ຍັງໄດ້ໂອ້ລົມ, ແລກປ່ຽນບັນຫາຕໍ່ກັບຂໍ້ຂ້ອງໃຈຂອງປະຊາຊົນ ແລະ ປະຊາຊົນກໍໄດ້ມີຄຳສະເໜີຄຳສະເໜີ ໂດຍສະເພາະແມ່ນບັນຫາທີ່ເກີດຈາກປາກົດການຫຍໍ້ທໍ້ຂອງສັງຄົມ ເພື່ອໃຫ້ສະພານຳເອົາຄຳສະເໜີໄປໃຫ້ພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂຕາມລະບຽບກົດໝາຍ. ພ້ອມດຽວກັນນັ້ນ, ຄະນະ ສສຊ-ສສຂ ກໍໄດ້ຊີ້ແຈງໃຫ້ພໍ່ແມ່ປະຊາຊົນໄດ້ຮັບຮູ້ຕໍ່ກັບບາງບັນຫາທີ່ເຫັນວ່າເປັນບັນຫາໃໝ່ ກໍຈະນຳເອົາໄປສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງເພື່ອແກ້ໄຂ.

ພາຍຫຼັງສຳເລັດການໂຄສະນາເຜີຍແຜ່ແລ້ວ ບັນດາທ່ານ ສສຊ, ສສຂ ທີ່ເຄື່ອນໄຫວແຕ່ລະເມືອງຕ້ອງໄດ້ສະຫຼຸບລາຍງານເປັນລາຍລັກອັກສອນ ສົ່ງໃຫ້ຄະນະປະຈຳສະພາປະຊາຊົນແຂວງ ໂດຍຍົກໃຫ້ເຫັນດ້ານດີ, ດ້ານຄົງຄ້າງ, ວິທີການແກ້ໄຂ ແລະ ຄຳສະເໜີຂອງປະຊາຊົນ ຕ້ອງໄຈ້ແຍກລະອຽດແຕ່ລະຄຳສະເໜີໃນຄວາມຮັບຜິດຊອບຂອງພາກສ່ວນໃດ, ຄຳສະເໜີທີ່ ສສຊ, ສສຂ ຊີ້ແຈງແລ້ວມີຫຍັງແດ່ ຈັກຄຳສະເໜີ, ມອບໃຫ້ບ້ານ, ເມືອງແກ້ໄຂຄຳສະເໜີຕໍ່ພໍ່ແມ່ປະຊາຊົນພາຍໃນເມືອງຂອງຕົນ.

**(ແສງຕາວັນ ລັດຕະນະວົງ)**

# ສສຂ ເມືອງຫົງສາ ເຜີຍແຜ່ຜົນສຳເລັດ ກອງປະຊຸມສະໄໝສາມັນເທື່ອທີ 5 ສຳເລັດຕາມແຜນ

(ສພຊ) ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງຫົງສາ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ສຳເລັດຕາມແຜນການລະຫວ່າງວັນທີ 8-13 ກັນຍາ 2023 ໃນ 14 ບ້ານຄື: ບ້ານໂພນໄຊ, ກໍ່ວມ່ວງ, ນ້ຳສິບ, ໜອງຫຼວງ, ວຽງແກ້ວ, ສີບຸນເຮືອງ, ນາແກ່ນຄຳ, ສີມຸງຄຸນ, ໂພນສູງ, ກໍ່ວສາລາ, ທ່າຊວ່າງ, ແທ່ນຄຳ, ແກ້ງແອນ ແລະ ບ້ານໂພນຈັນ ເຊິ່ງການເຄື່ອນໄຫວເຜີຍແຜ່ຄັ້ງນີ້ ແມ່ນໄດ້ແບ່ງເປັນ 3 ທີມຄື: ທີມທີ 1 ນຳໂດຍທ່ານ ນາງ ວິລະພອນ ທອງພິມ ຮອງປະທານສະພາປະຊາຊົນແຂວງ, ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງໄຊຍະບູລີ, ທີມທີ 2 ນຳໂດຍທ່ານ ແຫຼ້ ອ່ອນສົມບຸນ ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງຫົງສາ, ຫົວໜ້າອົງການກວດກາລັດ, ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງຂັ້ນເມືອງ ແລະ ທີມທີ 3 ນຳໂດຍທ່ານ ບຸນທັນ ພານິດ ສສຂ ປະຈຳເມືອງຫົງສາ; ຜູ້ເຂົ້າຮ່ວມຮັບຟັງໃນແຕ່ລະຈຸດມີພະນັກງານຜູ້ຊີ້ນຳປະຈຳບ້ານ, ອົງການປົກຄອງບ້ານ ຕະຫຼອດຮອດຂະແໜງການຂອງບ້ານ ແລະ ປະຊາຊົນ ໃຫ້ການຕ້ອນຮັບຢ່າງອົບອຸ່ນ.



ການເຄື່ອນໄຫວໃນແຕ່ລະຈຸດ, ໄດ້ຮັບຟັງລາຍງານສະພາບການຈັດຕັ້ງປະຕິບັດວຽກງານທີ່ພົ້ນເດັ່ນຂອງບ້ານໂດຍສັງເຂບ ແລະ ຮັບຟັງກ່ຽວກັບຄຳສະເໜີຂອງປະຊາຊົນທີ່ມີຫຼາຍບັນຫາສະເໜີຕໍ່ ສສຂ ແລະ ຕໍ່ກັບຄຳສະເໜີດັ່ງກ່າວຈະໄດ້ນຳໄປສະເໜີຕໍ່ຄະນະນຳຂັ້ນເທິງ ກໍຄືພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຮູ້ ແລະ ພິຈາລະນາແກ້ໄຂຕາມຄວາມເໝາະສົມໃນຕໍ່ໜ້າ. ຈາກນັ້ນ, ປະຊາຊົນກໍໄດ້ຮັບຟັງການເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງກອງປະຊຸມໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຕ່າງໆ ເຊັ່ນ: ໄດ້ພິຈາລະນາ, ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນຕົ້ນປີ 2023 ແລະ ທິດທາງ ແຜນການ 6 ເດືອນທ້າຍປີ 2023, ພິຈາລະນາ, ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023, ພິຈາລະນາ, ຮັບຮອງເອົາວິໄສທັດ ຮອດປີ 2040 ແລະ ຍຸດທະສາດການພັດທະນາແຮ່ທາດ ຮອດປີ 2030, ພິຈາລະນາ, ຮັບຮອງເອົາວິໄສທັດຮອດປີ 2040 ແລະ ຍຸດທະສາດການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030, ພິຈາລະນາ, ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ (ໄລຍະ ປີ 2020-2023), ພິຈາລະນາ, ຮັບຮອງເອົາບົດລາຍງານຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 4 ຫາເທື່ອທີ 5 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX, ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍຈຳນວນ 10 ສະບັບ ໃນນີ້, ກົດໝາຍສ້າງໃໝ່ 4 ສະບັບ ແລະ ກົດໝາຍປັບປຸງ 6 ສະບັບ ແລະ ໄດ້ພິຈາລະນາ ແລະ ຮັບຮອງເອົາການແຕ່ງຕັ້ງ ສະມາຊິກຜູ້ພິພາກສາຂອງສານປະຊາຊົນສູງສຸດ ຈຳນວນ 4 ທ່ານ ແລະ ຍັງໄດ້ຮັບຟັງການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ຕື່ມອີກ.

ທັງນີ້, ກໍເພື່ອເປັນການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ບັນດາເນື້ອໃນສຳຄັນຕ່າງໆ ທີ່ກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມສະພາປະຊາຊົນແຂວງ ໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາໃຫ້ພໍ່ປະຊາຊົນບັນດາເຜົ່າໄດ້ຮັບຮູ້ຢ່າງກວ້າງຂວາງ, ທົ່ວເຖິງ ທັງເປັນການຫັນລົງຮາກຖານ, ເກັບກຳຄຳຄິດຄຳເຫັນ, ຄຳສະເໜີຕ່າງໆຂອງຜູ້ມີສິດເລືອກຕັ້ງ ຕໍ່ການສ້າງສາພັດທະນາປະເທດຊາດອີກດ້ວຍ

**(ກິດຕິສັກ ບົວໄລ)**



# ສພຂ ວຽງຈັນ ສະຫຼຸບຖອດຖອນບົດຮຽນການກະກຽມ ແລະ ດຳເນີນກອງປະຊຸມຕ່າງໆ

(ສພຊ) ສະພາປະຊາຊົນແຂວງ (ສພຂ) ວຽງຈັນ ໄດ້ຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນການກະກຽມ ແລະ ດຳເນີນ 3 ກອງປະຊຸມຄື: ກອງປະຊຸມປະເມີນຄວາມໄວ້ວາງໃຈໃນການປະຕິບັດໜ້າທີ່ຂອງບຸກຄະລະກອນ ທີ່ ສພຂ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ, ກອງປະຊຸມການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ໃນຂົງເຂດສະພາແຫ່ງຊາດ ແລະ ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສພຂ ວຽງຈັນ ຊຸດທີ II ໂດຍການເປັນປະທານຂອງທ່ານ ລຳໄມ ກູດລາວົງ ຮອງປະທານ ສພຂ ວຽງຈັນ, ມີບັນດາທ່ານຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫຼອດຮອດພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.



ກອງປະຊຸມໄດ້ຮັບຟັງການຂຶ້ນຜ່ານບົດສະຫຼຸບຖອດຖອນບົດຮຽນການກະກຽມ ແລະ ດຳເນີນ 3 ກອງປະຊຸມດັ່ງກ່າວ ຈາກທ່ານ ນາງ ໃສແສງຈັນ ແສງພະຈັນ ຮອງເລຂາທິການ ສພຂ ເຊິ່ງທານໄດ້ຍົກໃຫ້ເຫັນຜົນງານດ້ານດີ, ດ້ານອ່ອນຂໍ້ຄົງຄ້າງ ເປັນຕົ້ນແມ່ນວຽກງານດ້ານການກະກຽມເນື້ອໃນ, ວຽກງານບໍລິຫານ-ພິທີການ, ວຽກງານສື່ມວນຊົນ ແລະ ວຽກງານປົ່ນອ້ອມດ້ານອື່ນໆ. ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ປະກອບຄຳຄິດຄຳເຫັນໃສ່ບົດສະຫຼຸບດັ່ງກ່າວຢ່າງກົງໄປກົງມາ ເພື່ອເຮັດໃຫ້ເນື້ອໃນບົດດັ່ງກ່າວ ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບຄວາມເປັນຈິງ ທັງເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດຄັ້ງຕໍ່ໄປໃຫ້ມີຜົນສຳເລັດ ແລະ ມີປະສິດພາບສູງຂຶ້ນກວ່າເກົ່າ.

ໃນຕອນທ້າຍ,ປະທານກອງປະຊຸມໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ພະນັກງານ-ລັດຖະກອນພາຍໃນ ສພຂ ທີ່ໄດ້ພ້ອມກັນເອົາໃຈໃສ່ປະຕິບັດໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນສຳເລັດໃນໜ້າວຽກຕ່າງໆຕາມການມອບໝາຍ; ພ້ອມນັ້ນ, ທ່ານຍັງໄດ້ເນັ້ນໜັກໃຫ້ພະນັກງານທັງໝົດ ຈົ່ງສືບຕໍ່ເສີມຂະຫຍາຍຜົນງານດ້ານດີ, ປັບປຸງແກ້ໄຂບັນຫາທີ່ຍັງຄົງຄ້າງ, ຮັດແໜ້ນຄວາມສາມັກຄີພາຍໃນ, ເພີ່ມທະວີຄວາມເປັນເຈົ້າການໃນການກະກຽມເນື້ອໃນ ແລະ ກົນໄກການປະສານງານຮ່ວມກັບອົງການປົກຄອງແຂວງ, ຂະແໜງການທີ່ກ່ຽວຂ້ອງໃຫ້ມີຄວາມຄ່ອງຕົວ, ວ່ອງໄວ ແລະ ທັນກຳນົດເວລາ ເພື່ອເປັນບົດຮຽນໃຫ້ແກ່ການດຳເນີນກອງປະຊຸມຄັ້ງຕໍ່ໄປ.




# ກົດໝາຍ ວ່າດ້ວຍຄວາມປອດໄພຂອງເຂື່ອນ

ຕໍ່ຈາກສະບັບກ່ອນ

## ພາກທີ II
## ຂະໜາດ ແລະ ປະເພດຄວາມສ່ຽງຂອງເຂື່ອນ

**ມາດຕາ 9 ການຈັດຂະໜາດຂອງເຂື່ອນ**

ຂະໜາດຂອງເຂື່ອນ ໃຫ້ຈັດຕາມຄວາມສູງຂອງເຂື່ອນ ແລະ ບໍລິມາດຂອງອ່າງເກັບນໍ້າ.

ເຂື່ອນ ມີ ສອງຂະໜາດ ຄື:

1. ເຂື່ອນຂະໜາດໃຫຍ່ ຊຶ່ງແມ່ນເຂື່ອນທີ່ມີຄວາມສູງ ແລະ ບໍລິມາດອ່າງເກັບນໍ້າ ຕາມແຕ່ລະກໍລະນີ ດັ່ງນີ້:

- ເຂື່ອນທີ່ມີຄວາມສູງ ແຕ່ສິບຫ້າແມັດ ຂຶ້ນໄປ;

ເຂື່ອນທີ່ມີຄວາມສູງຕໍ່າກວ່າສິບຫ້າແມັດ ແລະ ມີບໍລິມາດອ່າງເກັບນໍ້າ ແຕ່ສາມລ້ານແມັດກ້ອນຂຶ້ນໄປ.

2. ເຂື່ອນຂະໜາດນ້ອຍ ຊຶ່ງແມ່ນ ເຂື່ອນທີ່ມີຄວາມສູງຕໍ່າກວ່າ ສິບຫ້າແມັດ ແລະ ບໍລິມາດອ່າງເກັບນໍ້າຕໍ່າກວ່າສາມລ້ານແມັດກ້ອນ.

**ມາດຕາ 10 ການຈັດປະເພດຄວາມສ່ຽງຂອງເຂື່ອນ**

ການຈັດປະເພດຄວາມສ່ຽງຂອງເຂື່ອນ ແມ່ນເພື່ອກໍານົດມາດຕະການ, ມາດຕະຖານໃນການສຶກສາສໍາຫຼວດ, ອອກແບບ, ກໍ່ສ້າງແລະດໍາເນີນງານຂອງເຂື່ອນເພື່ອຮັບປະກັນຄວາມປອດໄພ, ການຄຸ້ມຄອງ, ແບບ ແຜນການກວດກາ ແລະ ວາງແຜນຮັບມືກໍລະນີສຸກເສີນ.

ປະເພດຄວາມສ່ຽງຂອງເຂື່ອນ ໃຫ້ຈັດຕາມການປະເມີນປັດໄຈຄວາມສ່ຽງດ້ານ ຄວາມສູງຂອງໂຕເຂື່ອນ, ບໍລິມາດອ່າງເກັບນໍ້າ, ປະຊາກອນອາໄສຢູ່ລຸ່ມເຂື່ອນທີ່ມີຄວາມສ່ຽງ ແລະ ຜົນເສຍຫາຍດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ຊຶ່ງແບ່ງອອກເປັນ ສີ່ປະເພດ ດັ່ງນີ້:

1. ຄວາມສ່ຽງຕໍ່າ;
2. ຄວາມສ່ຽງກາງ;
3. ຄວາມສ່ຽງສູງ;
4. ຄວາມສ່ຽງຮ້າຍແຮງ.

ເງື່ອນໄຂໃນການຈັດປະເພດຄວາມສ່ຽງແຕ່ລະປະເພດ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 11 ການຈົດທະບຽນຄວາມສ່ຽງຂອງເຂື່ອນ**

ຜູ້ພັດທະນາເຂື່ອນ ຕ້ອງຈົດທະບຽນປະເພດຄວາມສ່ຽງຂອງເຂື່ອນທຸກຂະໜາດ ນໍາຂະແໜງການທີ່ກ່ຽວຂ້ອງພາຍໃນເວລາຫົກສິບວັນ ນັບແຕ່ວັນໄດ້ຮັບຮອງການອອກແບບພື້ນຖານເປັນຕົ້ນໄປ.

ສໍາລັບເຂື່ອນທີ່ກໍ່ສ້າງສໍາເລັດ ກ່ອນກົດໝາຍສະບັບນີ້ ໃຫ້ຜູ້ພັດທະນາເຂື່ອນ ຈົດທະບຽນປະເພດຄວາມສ່ຽງຂອງເຂື່ອນດັ່ງກ່າວນໍາຂະແໜງການທີ່ກ່ຽວຂ້ອງ ພາຍໃນເວລາສິບສອງເດືອນ ນັບແຕ່ວັນທີ່ກົດໝາຍສະບັບນີ້ ມີຜົນສັກສິດ.

ໃບທະບຽນປະເພດຄວາມສ່ຽງ ມີອາຍຸການນໍາໃຊ້ຕາມແຕ່ລະປະເພດຄວາມສ່ຽງ ຊຶ່ງຜູ້ພັດທະນາເຂື່ອນຕ້ອງກວດກາຄວາມປອດໄພຂອງເຂື່ອນຢ່າງຮອບດ້ານຄືນ.

ລາຍລະອຽດຂອງການຈົດທະບຽນ, ການອອກໃບທະບຽນ ແລະ ອາຍຸຂອງໃບທະບຽນປະເພດຄວາມສ່ຽງ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 12 ການຄຸ້ມຄອງປະເພດຄວາມສ່ຽງຂອງເຂື່ອນ**

ການຄຸ້ມຄອງປະເພດຄວາມສ່ຽງຂອງເຂື່ອນ ໃຫ້ປະຕິບັດດັ່ງນີ້:

ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງກະສິກໍາ ແລະ ປ່າໄມ້ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ຄຸ້ມຄອງປະເພດຄວາມສ່ຽງຂອງເຂື່ອນທີ່ມີຄວາມສ່ຽງກາງຂຶ້ນໄປ ຕາມຂອບເຂດວາມຮັບຜິດຊອບຂອງຕົນ ໂດຍມີການປະສານສົມທົບກັບກະຊວງ ແລະ ອົງການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງ;

1. ພະແນກພະລັງງານ ແລະ ບໍ່ແຮ່, ພະແນກກະສິກໍາ ແລະ ປ່າໄມ້ ແລະ ພະແນກໂຍທາທິການ ແລະ ຂົນສົ່ງ ບ່ອນທີ່ມີເຂື່ອນຕັ້ງຢູ່ ຄຸ້ມຄອງປະເພດຄວາມສ່ຽງຂອງເຂື່ອນທີ່ມີຄວາມສ່ຽງຕໍ່າ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍມີການປະສານສົມທົບກັບພະແນກການແລະອົງການປົກຄອງຂັ້ນເມືອງທີ່ກ່ຽວຂ້ອງ.

## ພາກທີ III
## ການຄຸ້ມຄອງຄວາມປອດໄພຂອງເຂື່ອນ
### ໝວດທີ 1
### ການສຶກສາຄວາມເປັນໄປໄດ້ດ້ານເຕັກນິກ

**ມາດຕາ 13 ການສຶກສາຄວາມເປັນໄປໄດ້ດ້ານເຕັກນິກ**

ຜູ້ພັດທະນາເຂື່ອນ ເປັນຜູ້ຮັບຜິດຊອບໃນການສໍາຫຼວດ, ເກັບກໍາຂໍ້ມູນ, ຄົ້ນຄວ້າ ແລະ ວິໄຈຂໍ້ມູນຕົວຈິງ ຕາມຫຼັກວິສະວະກໍາເຂື່ອນ, ດ້ານທໍລະນີສາດ, ທໍລະນີເຕັກນິກ, ແຜ່ນດິນໄຫວ, ອຸທົກກະສາດ ແລະ ພູມສັນຖານ ທີ່ນໍາໃຊ້ເຂົ້າໃນການສຶກສາ ໂດຍມີການຄິດໄລ່, ວິເຄາະ ຢ່າງລະອຽດ, ຄົບຖ້ວນ ແລະ ຮອບດ້ານແລ້ວ ສ້າງບົດລາຍງານການສຶກສາຄວາມເປັນໄປໄດ້ດ້ານເຕັກນິກເພື່ອສະເໜີຂະແໜງການທີ່ກ່ຽວຂ້ອງພິຈາລະນາ.

ສໍາລັບການສຶກສາຄວາມເປັນໄປໄດ້ດ້ານເຕັກນິກຂອງເຂື່ອນທີ່ຢູ່ສາຍນໍ້າທີ່ມີເຂື່ອນອື່ນຢູ່ແລ້ວ ຜູ້ພັດທະນາເຂື່ອນ ຕ້ອງປະຕິບັດດັ່ງນີ້:

ສຶກສາຄວາມເປັນໄປໄດ້ດ້ານເຕັກນິກ ສໍາລັບການພັດທະນາເຂື່ອນທີ່ຢູ່ຕອນລຸ່ມ ໂດຍມີການອອກແບບທີ່ຮັບປະກັນຄວາມປອດໄພແລະສຶກສາຜົນກະທົບທີ່ອາດເກີດຈາກເຂື່ອນທີ່ມີຢູ່ແລ້ວ ແລະ ເຂື່ອນທີ່ກໍາລັງຈະກໍ່ສ້າງ ທີ່ຢູ່ເທິງໂຄງການ;

ສຶກສາຄວາມເປັນໄປໄດ້ດ້ານເຕັກນິກ ສໍາລັບການພັດທະນາເຂື່ອນທີ່ຢູ່ຕອນເທິງ ໂດຍມີການອອກແບບທີ່ຮັບປະກັນຄວາມປອດໄພແລະສຶກສາຜົນກະທົບທີ່ອາດເກີດຈາກການແຕກພັງຂອງເຂື່ອນທີ່ຕົນພັດທະນາ ເພື່ອຮັບປະກັນການຮອງຮັບປະລິມານນໍ້າທີ່ໄຫຼລົງໄປໄດ້.

ຂັ້ນຕອນ ການຄິດໄລ່ ແລະ ສຶກສາຂໍ້ມູນ ສໍາລັບການສຶກສາຄວາມເປັນໄປໄດ້ດ້ານເຕັກນິກ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 14 ການຮັບຮອງການສຶກສາຄວາມເປັນໄປໄດ້ດ້ານເຕັກນິກ**

ພາຍຫຼັງໄດ້ສຶກສາຄວາມເປັນໄປໄດ້ດ້ານເຕັກນິກແລ້ວ ຜູ້ພັດທະນາເຂື່ອນຕ້ອງເຮັດບົດລາຍງານ ສົ່ງໃຫ້ຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າພິຈາລະນາຮັບຮອງ ເມື່ອເຫັນວ່າການສຶກສາຄວາມເປັນໄປໄດ້ດ້ານເຕັກນິກນັ້ນຖືກຕ້ອງ, ສອດຄ່ອງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 13 ຂອງກົດໝາຍສະບັບນີ້.

ໃນກໍລະນີ ເຫັນວ່າການສຶກສາຄວາມເປັນໄປໄດ້ດ້ານເຕັກນິກ ຍັງບໍ່ທັນວິເຄາະຢ່າງລະອຽດ ແລະ ຮອບດ້ານ ຂະແໜງການທີ່ກ່ຽວຂ້ອງ ຕ້ອງສົ່ງບົດລາຍງານດັ່ງກ່າວໃຫ້ຜູ້ພັດທະນາເຂື່ອນນໍາໄປປັບປຸງແກ້ໄຂ ແລະ ສົ່ງບົດລາຍງານດັ່ງກ່າວ ໃຫ້ຂະແໜງການທີ່ກ່ຽວຂ້ອງ ຕາມເວລາທີ່ກໍານົດໄວ້.

ໃນການພິຈາລະນາຮັບຮອງ ຂະແໜງການທີ່ກ່ຽວຂ້ອງສາມາດລົງກວດກາພາກສະໜາມ ຫຼື ແຈ້ງໃຫ້ຜູ້ພັດທະນາເຂື່ອນສໍາຫຼວດ ຫຼື ເກັບກໍາຂໍ້ມູນເພີ່ມຕື່ມ ໃນກໍລະນີທີ່ເຫັນວ່າ ມີຄວາມຈໍາເປັນ ເພື່ອຮັບປະກັນໃຫ້ການພິຈາລະນາຮັບຮອງ ມີຄວາມຖືກຕ້ອງ ແລະ ຄົບຖ້ວນ ພ້ອມທັງຮັບປະກັນຄວາມປອດໄພຂອງເຂື່ອນໂດຍແມ່ນຜູ້ພັດທະນາເຂື່ອນ ເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ.

ນອກຈາກການສ້າງບົດລາຍງານການສຶກສາຄວາມເປັນໄປໄດ້ດ້ານເຕັກນິກແລ້ວ ຜູ້ພັດທະນາເຂື່ອນຍັງຕ້ອງສົ່ງບົດລາຍງານກ່ຽວກັບການກະກຽມການອອກແບບເຂື່ອນໃຫ້ຂະແໜງການທີ່ກ່ຽວຂ້ອງອີກດ້ວຍ.

### ໝວດທີ 2
### ການອອກແບບ

**ມາດຕາ 15 ການອອກແບບ ແລະ ການຮັບຮອງການອອກແບບ**

ການອອກແບບໂຄງການເຂື່ອນ ປະກອບດ້ວຍ ການອອກແບບພື້ນຖານ, ການອອກແບບລະອຽດ ແລະ ການອອກແບບສຸດທ້າຍ ຊຶ່ງແຕ່ລະການອອກແບບຕ້ອງໄດ້ຮັບການຮັບຮອງຈາກຂະແໜງການກ່ຽວຂ້ອງ ດັ່ງນີ້:

1. ການອອກແບບໂຄງການ ເຂື່ອນໄຟຟ້າ ແລະ ເຂື່ອນຫາງແຮ່ ຕ້ອງໄດ້ຮັບການຮັບຮອງຈາກຂະແໜງ ການພະລັງງານ ແລະ ບໍ່ແຮ່;

2. ການອອກແບບໂຄງການເຂື່ອນຊົນລະປະທານ ຕ້ອງໄດ້ຮັບການຮັບຮອງຈາກຂະແໜງການ ກະສິກໍາ ແລະ ປ່າໄມ້;

3. ການອອກແບບໂຄງການເຂື່ອນນໍ້າປະປາ ຕ້ອງໄດ້ຮັບການຮັບຮອງຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ.

ສໍາລັບການອອກແບບເຂື່ອນອື່ນ ກໍຕ້ອງໄດ້ຮັບການຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 16 ການອອກແບບພື້ນຖານ**

ຜູ້ພັດທະນາເຂື່ອນ ຕ້ອງດໍາເນີນການອອກແບບພື້ນຖານພາຍຫຼັງບົດລາຍງານການສຶກສາຄວາມເປັນໄປໄດ້ດ້ານເຕັກນິກຜ່ານການຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ.

ໃນການດໍາເນີນການອອກແບບພື້ນຖານ ຜູ້ພັດທະນາເຂື່ອນຕ້ອງປະຕິບັດຕາມໜ້າວຽກຂອງການອອກແບບພື້ນຖານ ເປັນຕົ້ນການສ້າງບົດລາຍງານລັກສະນະເບື້ອງຕົ້ນຂອງການອອກແບບ, ບົດລາຍງານມາດ ຕະຖານ ແລະ ຫຼັກການການອອກແບບ ແລະ ບົດລາຍງານການອອກແບບພື້ນຖານ.

**ມາດຕາ 17 ການຮັບຮອງການອອກແບບພື້ນຖານ**

ພາຍຫຼັງສໍາເລັດການອອກແບບພື້ນຖານແລ້ວ ໃຫ້ຜູ້ພັດທະນາເຂື່ອນ ສົ່ງບົດລາຍງານການອອກແບບພື້ນຖານ ໃຫ້ຂະແໜງການທີ່ກ່ຽວຂ້ອງ ເພື່ອພິຈາລະນາຮັບຮອງ.

ສໍາລັບຂັ້ນຕອນການຮັບຮອງການອອກແບບພື້ນຖານ ໄດ້ກໍານົດໄວ້ໃນບຽບການຕ່າງຫາກ.

**ມາດຕາ 18 ການອອກແບບລະອຽດ**

ພາຍຫຼັງການອອກແບບພື້ນຖານໄດ້ຮັບການຮັບຮອງແລ້ວ ຜູ້ພັດທະນາເຂື່ອນ ຕ້ອງດໍາເນີນການອອກແບບລະອຽດ ຊຶ່ງແມ່ນວິສະວະກອນຝ່າຍຜູ້ພັດທະນາເຂື່ອນ ເປັນຜູ້ຮັບຜິດຊອບໃນການອອກແບບລະອຽດ ແລະ ກວດກາຢັ້ງຢືນການອອກແບບ ແລ້ວລາຍງານໃຫ້ຂະແໜງການທີ່ກ່ຽວຂ້ອງ ເພື່ອເປັນຂໍ້ມູນໃຫ້ແກ່ການກວດກາ.

**ມາດຕາ 19 ແບບສຸດທ້າຍ**

ພາຍຫຼັງສໍາເລັດການກໍ່ສ້າງເຂື່ອນ ຜູ້ພັດທະນາເຂື່ອນ ຕ້ອງສ້າງແບບສຸດທ້າຍທີ່ຖືກຕ້ອງຕາມການກໍ່ ສ້າງຕົວຈິງ ໂດຍມີການຢັ້ງຢືນຈາກວິສະວະກອນຝ່າຍຜູ້ພັດທະນາເຂື່ອນ ແລ້ວສົ່ງໃຫ້ຂະແໜງການທີ່ກ່ຽວຂ້ອງ ເພື່ອເກັບຮັກສາໄວ້ໃນລະບົບຂໍ້ມູນ.

### ໝວດທີ 3
### ການກໍ່ສ້າງເຂື່ອນ ແລະ ການກັກເກັບນໍ້າ

**ມາດຕາ 20 ໜ້າວຽກທີ່ຕ້ອງສໍາເລັດ ກ່ອນເລີ່ມການກໍ່ສ້າງເຂື່ອນ**

ຜູ້ພັດທະນາເຂື່ອນ ຕ້ອງສໍາເລັດໜ້າວຽກກ່ອນເລີ່ມການກໍ່ສ້າງເຂື່ອນ ດັ່ງນີ້:

1. ແຕ່ງຕັ້ງຫົວໜ້າວິສະວະກອນທີ່ຮັບຜິດຊອບໃນການກໍ່ສ້າງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 42 ຂອງກົດໝາຍສະບັບນີ້;

2. ການອອກແບບພື້ນຖານຖືກຮັບຮອງ;

3. ແຜນຮັບມືສຸກເສີນສໍາລັບການກໍ່ສ້າງຖືກຮັບຮອງ;

4. ການອອກແບບລະອຽດ ຖືກຮັບຮອງຈາກວິສະວະກອນຝ່າຍຜູ້ພັດທະນາເຂື່ອນ;

ອ່ານຕໍ່ສະບັບໜ້າ




# ຂໍ້ຄິດໃນບຸນເຂົ້າປະດັບດິນ

# ດັ້ນກົບເມກ

ອາທິດແລ້ວ ຜູ້ຂຽນໄດ້ໄປນັ່ງກິນເຝີຢູ່ຮ້ານແຫ່ງໜຶ່ງໃນນະຄອນຫຼວງ ໄດ້ຍິນລູກຄ້າກັບເຈົ້າຂອງຮ້ານໂສກັນເລື່ອງການເຮັດບຸນ, ເຮັດຄວາມດີ ແລະ ການດຳເນີນຊີວິດທີ່ບໍ່ຕ້ອງລໍເວລາເລີກຍາມ ເມື່ອຄວາມພ້ອມມີກໍລິງມືເຮັດໄດ້ ຜູ້ຂຽນຈຶ່ງຄິດທົບທວນເບິ່ງວ່າ ສັງຄົມລາວເຮົານີ້ກໍໂຊກດີແບບໜຶ່ງ ທີ່ມີຄະຕິຄວາມເຊື່ອ ປະສົມປົນກັບທັງຜີ, ພຸດ ແລະ ພາມ ເຊິ່ງຜູ້ສະຫຼາດມີປັນຍາ ກໍຈະໄຈ້ແຍກອອກ ຫາເຫດຜົນບໍ່ໃຫ້ງົມງວາຍ ແລ້ວປະພຶດຕົນໃຫ້ພໍດີຖືກຕ້ອງ ໝາຍຄວາມວ່າ ເມື່ອມີສັດທາ ກໍຕ້ອງມີປັນຍາແຍກແຍະໄດ້, ຮູ້ເຫດຜົນຈະແຈ້ງໃນການປະພຶດ ບໍ່ເອົາສັດທາແບບມືດບອດນຳໜ້າ.

ບຸນເຂົ້າປະດັບດິນກໍເຊັ່ນດຽວກັນ ທີ່ຈັດຢູ່ໃນຮີດ 12 ຄອງ 14 ຄົນລາວເຮັດບຸນຫໍ່ເຂົ້າປະດັບດິນ ກົງກັບມື້ແຮມ 14 ຄ່ຳເດືອນ 9 ເຊິ່ງເຊື່ອວ່າເປັນບຸນອຸທິດແກ່ຍາດພີ່ນ້ອງທີ່ຕາຍໄປແລ້ວ ໂດຍສະເພາະອຸທິດແກ່ພວກເປດທີ່ຖືກປ່ອຍມາຈາກຂຸມນະລົກ, ຕອນເຊົ້າ 3-4 ໂມງ ຫຼື 5 ໂມງເຊົ້າ ຊາວບ້ານຈະນຳເອົາຫໍ່ເຂົ້າພ້ອມດ້ວຍອາຫານຫວານຄາວທີ່ຫໍ່ໃສ່ໃບຕອງໄປວາງໄວ້ ກຳແພງວັດ ຫຼື ເຂດທີ່ເໝາະສົມ ເພື່ອອຸທິດແກ່ຍາດພີ່ນ້ອງມາຮັບເອົາສ່ວນບຸນ; ຫຼັງຈາກນັ້ນ ກໍພາກັນໄປວັດຖວາຍທານແກ່ພະສົງ ແລະ ຟັງທຳມະເທດສະໜາ, ຮັບສິນ 5 (ຫ້າ) ຂໍ້ໜ້າສັງເກດ ຫໍ່ເຂົ້າໄປວາງໄວ້ດິນອຸທິດແກ່ຜີເປດ..., ອາຫານເອົາໄປໃສ່ບາດຈະຄືກັນ ມີໝາກໄມ້ ແລະ ຫົວມັນຕ່າງໆ ເວົ້າໃຫ້ສັ້ນແມ່ນພຶດຜົນຈາກການກະເສດປູກຝັງ.

ບຸນເຂົ້າປະດັບດິນ ຈຶ່ງມີຂໍ້ສັນນິຖານໄດ້ວ່າ ໜຶ່ງເປັນບຸນສະແດງອອກເຊິ່ງຄວາມກະຕັນຍູຮູ້ຄຸນ, ບູຊາບັນພະບຸລຸດເຊື້ອໃນຈິດວິນຍານ ອຸທິດແກ່ສັບພະສັດທັງຫຼາຍ ແລະ ຖວາຍທານແກ່ພະສົງ ໂດຍນຳເອົາຜົນປູກຈາກເຫື່ອແຮງ ທາງກະເສດເຊິ່ງບຸນຕໍ່ໄປແມ່ນເຂົ້າສະຫຼາກ ກໍຖືໄດ້ວ່າເອົາຜົນຈາກກະເສດມາຖວາຍທານເຮັດບຸນ ດັ່ງນັ້ນ ສັງຄົມລາວຈຶ່ງມີຮາກຖານໝັ້ນຄົງທາງອາຫານ ມາຈາກການກະເສດປູກຝັງ ເວລາເຮັດບຸນແລ້ວ ຕາມຊົນນະບົດ ເຖົ້າແກ່ອາວຸໂສ ຈະລົມແລກປ່ຽນກັນວ່າເຮັດນາ-ເຮັດສວນປູກຝັງໄດ້ຜົນດີແບບໃດ...?

ສັງລວມວ່າ: ບຸນເຂົ້າປະດັບດິນ ສະແດງອອກເຖິງຄວາມກະຕັນຍູ; ສອນໃຫ້ຄົນເປັນຄົນດີ, ຮູ້ຕອບແທນບຸນຄຸນ ຍຶດໝັ້ນໃນຫຼັກສິນທຳ, ບຳລຸງລ້ຽງຖວາຍທານແກ່ພະສົງທີ່ສອນໃຫ້ເກີດສະຕິປັນຍານຳພາຊີວິດໃຫ້ພົບແສງສະຫວ່າງ ທຸກຄວາມເຊື່ອຈຶ່ງຕ້ອງມີເຫດຜົນ, ມີປັນຍາຊີ້ບອກເຫດ ບໍ່ເຊື່ອແບບມືດບອດ!





# ຂຽນຄຳລາວໃຫ້ຖືກ

#ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ພັກພາອາໄສ | ພັກພາອາໃສ |
| ນ້ຳໃສໃຈຈິງ | ນ້ຳໃສໃຈຈິງ |
| ພໍ່ແມ່ຫ່ວງໃຍ | ພໍ່ແມ່ຫວ່ງໃຍ |
| ລາວມັກຢອກໄຍ | ລາວມັກຢອກໃຍ |
| ນາງໃສ່ສິ້ນໄໝ | ນາງໄສ່ສິ້ນໃໝ |
| ປັບໄໝໃສ່ໂທດ | ປັບໃໝໃສ່ໂທດ |
| ຝັງຈິດຝັງໃຈ | ຝັງຈິດຝັງໄຈ |
| ວິໄຈວິຈານ | ວິໃຈວິຈານ |
| ງານແຫ້ໆໄດ໋ | ງານແຫ້ໆໃດ |

# ສາສະໜາ

# ຜູ້ອື່ນ



ສາສະໜາ ແມ່ນຄຳສອນ ເຊິ່ງແຕ່ລະສາສະໜາອາດຈະມີຄຳສັ່ງສອນຄືກັນ ຫຼື ຄ້າຍຄືກັນ, ແຕກຕ່າງກັນທາງດ້ານຮູບການ ແລະ ສັງຄົມ ໂດຍມີຈຸດໝາຍອັນດຽວກັນຄື: ສອນຄົນໃຫ້ເປັນຄົນດີ, ເຂົ້າກັບສັງຄົມໄດ້, ມີທີ່ຍຶດໝັ້ນທາງດ້ານຈິດໃຈ, ມີຄວາມສາມັກຄີ, ມີບັນທັດຖານໃນການປະຕິບັດ ທັງເປັນສູນລວມແຫ່ງຄວາມເຊື່ອ ແລະ ຄວາມເຄົາລົບນັບຖືອັນສູງສຸດຂອງມະນຸດໃນການຢູ່ຮ່ວມກັນ; ສາສະໜາແມ່ນຮູບຖານຈິດສຳນຶກ ຫຼື ຫຼັກທຳຄຳສັ່ງສອນທີ່ສາສະດາຂອງແຕ່ລະສາສະໜາຄົ້ນພົບ ແລະ ນຳມາສັ່ງສອນມະນຸດໃຫ້ເປັນຄົນດີ, ມີທີ່ຍຶດໝັ້ນທາງຈິດໃຈ, ມີຄວາມສາມັກຄີ, ມີບັນທັດຖານໃນການປະພຶດ, ປະຕິບັດ ແລະ ຢູ່ຮ່ວມກັນໂດຍສັນຕິ (ດຳລັດວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາຢູ່ ສປປ ລາວ, ເລກທີ 315/ລບ, ລົງວັນທີ 16/82016).

ໂດຍທົ່ວໄປແລ້ວ ສາສະໜາ ຕ້ອງມີອົງປະກອບ ດັ່ງນີ້:

- ມີຜູ້ປະກາດ, ກໍ່ຕັ້ງ ຫຼື ສາສະດາ (ຜູ້ສອນ ຫຼື ຜູ້ກໍ່ຕັ້ງສາສະໜາ) ທີ່ປາກົດຫຼັກຖານຢູ່ໃນປະຫວັດສາດ;
- ມີຄຳສອນໃນສາສະໜາ ລວມທັງກົດກ່ຽວກັບການປະຕິບັດຄຳສອນດັ່ງກ່າວ ຄື: ຂໍ້ຄວາມທີ່ຄວນຈົດຈຳສືບຕໍ່ກັນມາ ແລ້ວຈາລຶກໃນພະຄຳພີ;
- ມີຜູ້ສືບທອດ ຫຼື ຜູ້ແທນຢ່າງເປັນທາງການຂອງສາສະໜານັ້ນໆ ຫຼື ຜູ້ຮັບຄຳສອນນັ້ນມາປະຕິບັດ ເຊິ່ງໄດ້ແກ່ພະ ຫຼື ນັກບວດ ເຊິ່ງມີຄຸນສົມບັດຕາມແຕ່ລະສາສະໜາໄດ້ກຳນົດໄວ້;
- ມີສາສະນະສະຖານ ຄືເປັນສະຖານທີ່ເຄົາລົບ ຫຼື ເປັນທີ່ຕັ້ງຫຼືປູສະນີຍະສະຖານ ເຊັ່ນ: ວັດ, ໂບດ , ວິຫານ, ສຸເຫຼົ່າ ແລະ ອື່ນໆ;
- ມີສັນຍາລັກ ເຄື່ອງໝາຍ ຫຼື ສິ່ງແທນພິທີກຳ ລວມທັງປູສະນີຍະວັດຖຸ (ທີ່ເຄົາລົບບູຊາ) ເຊັ່ນ: ພະພຸດທະຮູບ, ໄມ້ກາງເຂນ ແລະອື່ນໆ;
- ເປັນເລື່ອງທີ່ເຊື່ອຖືໄດ້ ແລະ ມີການປະຕິບັດຕາມຄຳເຊື່ອນັ້ນ.

ທຸກສາສະໜາ ບໍ່ຈຳເປັນຕ້ອງມີອົງປະກອບຄົບ 6 ຂໍ້ ເຖິງວ່າຂາດຂໍ້ໃດໜຶ່ງ ກໍຍັງເປັນສາສະໜາໄດ້ ເຊັ່ນ: ສາສະໜາຂົງຈື້ ມີສາສະດາ ແຕ່ບໍ່ມີນັກບວດ, ສາສະໜາຮິນດູ ແລະ ຊິນໂຕ ບໍ່ມີສາສະດາ ແຕ່ຍັງມີຄົນນັບຖືສາສະໜາ; ສາສະໜາເປັນສິ່ງຈຳເປັນຂອງມວນມະນຸດ ບໍ່ວ່າຈະຢູ່ໃນສັງຄົມ ບໍ່ທັນມີການພັດທະນາດີ ຫຼື ສັງຄົມທີ່ຈະເລີນແລ້ວ ເພາະວ່າໜ້າທີ່ ຫຼື ຈຸດປະສົງເບື້ອງຕົ້ນຂອງສາສະໜາ ແມ່ນສົ່ງເສີມຄວາມເຂົ້າໃຈທີ່ດີຕໍ່ກັນ ຕະຫຼອດຮອດການຮັກສາຄວາມສາມັກຄີ, ກຳຈັດປັດເປົ່າບັນຫາຂໍ້ຂັດແຍ່ງລະຫວ່າງບຸກຄົນ.

ສາສະໜາ ມີຄວາມສຳຄັນ ຄື ເຮັດໃຫ້ມະນຸດຢູ່ຮ່ວມກັນໄດ້ຢ່າງສະຫງົບສຸກ, ດຳລົງຊີວິດຢ່າງມີຫຼັກ ເພາະວ່າທຸກສາສະໜາ ລ້ວນແຕ່ສອນໃຫ້ຄົນເປັນຄົນດີ ແລະ ເມື່ອສາສະນິກະຊົນທຸກສາສະໜາເປັນຄົນດີແລ້ວ ສັງຄົມກໍປາສະຈາກຄວາມຊົ່ວຮ້າຍ; ສາສະໜາເປັນບໍ່ເກີດແຫ່ງທຳມະຈັນຍາ ແລະ ຂະນົບທຳນຽມປະເພນີທີ່ດີງາມ; ສາສະໜາມີຄວາມສຳຄັນຕໍ່ຊາດ, ຕໍ່ປະເທດຊາດ ແລະ ກຸ່ມຄົນນັ້ນໆ ໃນດ້ານຕ່າງໆ ເຊັ່ນ: ດ້ານຂະນົບທຳນຽມ, ຮີດຄອງປະເພນີ, ວັດທະນະທຳ, ສະຖາປັດຕະຍະກຳ, ປະຕິມະກຳ, ວັນນະກຳ, ວິຈິດສິນ, ຄວາມສາມັກຄີ ແລະ ທັງເປັນແນວທາງໃນການດຳລົງຊີວິດ ຕາມແບບຢ່າງສາສະດາ ຫຼື ປະຕິບັດຕາມຫຼັກທຳຄຳສອນຂອງສາສະດາ ເພື່ອຊ່ວຍໃຫ້ຄົນເຮົາຮູ້ວ່າສິ່ງໃດດີ, ສິ່ງໃດຊົ່ວ, ຮູ້ຜິດ, ຮູ້ຖືກ ຕາມມາດຖານຂອງສາສະໜານັ້ນ ແລະ ຮູ້ເຖິງຜົນແຫ່ງການກະທຳນັ້ນເຊັ່ນ: ຄຳສອນຂອງພະພຸດທະສາສະໜາ ວ່າ: ທຳດີໄດ້ດີ ທຳຊົ່ວໄດ້ຊົ່ວ; ເປັນແຫຼ່ງຄວາມຮູ້ຂອງຂະແໜງການຕ່າງໆ ແລະ ຖ່າຍທອດສາດເຫຼົ່ານັ້ນສູ່ມວນມະນຸດໃນສັງຄົມ ເຊັ່ນ: ຄວາມຮູ້ດ້ານການແພດ, ສິລະປະກຳ, ສະຖາປັດຕະກຳ, ການຊ່າງ, ການດົນຕີ, ຫັດຖະກຳ ທັງເປັນເຄື່ອງມືສົ່ງເສີມຄວາມໝັ້ນຄົງໃນການປົກຄອງປະເທດ ຖ້າທຸກຄົນຍຶດຖືຫຼັກຄຳສອນຂອງສາສະໜາ ໃນແຕ່ລະປະການ ແລະ ເຮັດໃຫ້ຄົນປົກຄອງຕົນເອງໄດ້ ທັງໃນສະຖານທີ່ລັບ ແລະ ສະຖານທີ່ເປີດເຜີຍ; ສາສະໜາ ເປັນທີ່ເພິ່ງທາງໃຈເມື່ອເກີດຄວາມທຸກເດືອດໃຈ ກໍຄືເມື່ອຄົນເຮົາເກີດຄວາມທຸກກາຍ ແລະ ໃຈ ກໍມັກຈະຫາທາງອອກໃຫ້ກັບບັນຫາທີ່ເກີດຂຶ້ນ ແລະ ອີກແບບໜຶ່ງຂອງການແກ້ໄຂບັນຫາ ຄື: ການນຳຫຼັກທຳທາງສາສະໜາ ທີ່ຄົນເຄົາລົບນັບຖືມາເປັນທີ່ເພິ່ງທາງໃຈ ແລະ ນຳມາໃຊ້ເປັນແນວທາງໃນການແກ້ໄຂບັນຫາ.




ຄວາມກ້າວໜ້າສູ່ຄວາມສຳເລັດ ຄືການຮຽນຮູ້ຈາກປະສົບການ ແລະ ການຜິດພາດທີ່ຜ່ານມາຄັ້ງໜຶ່ງໃນຊີວິດ ຖ້າຄິດທາງບວກໄດ້ ແນ່ນອນແປ້ວທີ່ໄດ້ຮັບ ຈະພິກປີ້ນຊີວິດຄືນສູ່ຄວາມຈະເລີນ.



# ດື່ມກາເຟຫຼາຍ ຄວນລະວັງ

**ສຸກສະບາຍຫາຍໂຣຄາ** **# ສາວແວ່ນ**

ຫຼາຍທ່ານເລືອກດື່ມກາເຟຕອນເຊົ້າ ຫຼື ຕອນບ່າຍ ເພື່ອໃຫ້ຮູ້ສຶກມີພະລັງ ແລະ ເປັນການກະຕຸ້ນສະໝອງ ເພື່ອຊ່ວຍໃນການເຮັດວຽກໃນແຕ່ລະມື້ ເຊິ່ງອາດຈະກາຍເປັນກິດຈະວັດປະຈຳວັນຂອງບາງທ່ານ ແຕ່ທ່ານຮູ້ບໍ່ວ່າ ການດື່ມກາເຟຫຼາຍເກີນໄປ ກໍຈະເປັນອັນຕະລາຍຕໍ່ສຸຂະພາບເຊັ່ນດຽວກັນ; ໃນຄໍລຳສຸກສະບາຍຫາຍໂຣຄາສະບັບນີ້, ເຮົາມາເບິ່ງນຳກັນວ່າ ອັນຕະລາຍຈາກການດື່ມກາເຟຫຼາຍເກີນໄປ ຈະມີຄວາມສ່ຽງເຮັດໃຫ້ເກີດພະຍາດຫຍັງແດ່?



**1. ພະຍາດຫົວໃຈ:** ການດື່ມກາເຟຫຼາຍເກີນໄປ ຈະເຮັດໃຫ້ມີຄວາມສ່ຽງເປັນພະຍາດຫົວໃຈ ບໍ່ວ່າຈະເປັນພະຍາດຫົວໃຈເຕັ້ນໄວຜິດປົກກະຕິ ແລະ ເຕັ້ນຜິດຈັງຫວະ ລວມທັງພະຍາດທີ່ກ່ຽວຂ້ອງກັບກ້າມຊີ້ນຫົວໃຈ ເພາະຄາເຟອີນໃນກາເຟ ໄປກະຕຸ້ນຫົວໃຈໃຫ້ເຕັ້ນຜິດປົກກະຕິ ແລະ ບາງຄັ້ງອາດເຮັດໃຫ້ຫົວໃຈສັ່ນ ຍິ່ງຖ້າເປັນຄົນເຈັບທີ່ເປັນພະຍາດຫົວໃຈແລ້ວ ຍິ່ງຈະເຮັດໃຫ້ອາການຮ້າຍແຮງຂຶ້ນຕື່ມ.

**2. ອາການມຶນຊາ:** ເມື່ອຮ່າງກາຍຂາດວິຕາມິນບີ 1 ຈະເຮັດໃຫ້ເກີດອາການມຶນຊາ, ກ້າມເນື້ອອ່ອນເພຍ, ໄຄ່ບວມ, ບາງຄັ້ງເຮັດໃຫ້ຫົວໃຈວາຍ ແລະ ເສຍຊີວິດໄດ້; ສາເຫດໜຶ່ງ ທີ່ເຮັດໃຫ້ຮ່າງກາຍຂາດວິຕາມິນບີ 1 ແມ່ນຍ້ອນການດື່ມກາເຟຫຼາຍເກີນໄປ ເພາະຄາເຟອີນຈະລົບກວນການດູດຊຶມວິຕາມິນບີ 1 ເຖິງຈະກິນອາຫານທີ່ອຸດົມໄປດ້ວຍວິຕາມິນບີ 1 ຫຼາຍປານໃດກໍຕາມ ຖ້າມີນິໄສການດື່ມກາເຟຫຼາຍກໍຈະບໍ່ຊ່ວຍຫຍັງ.

**3. ໂລກກະດູກຜ່ອຍ:** ການດື່ມກາເຟຫຼາຍເກີນໄປ ເປັນສາເຫດໜຶ່ງຂອງພະຍາດກະດູກຜຸ ເນື່ອງຈາກກາເຟຂັດຂວາງການດູດຊຶມທາດແຄວຊຽມ ທັງຂັດຂວາງການນຳທາດແຄວຊຽມໄປໃຊ້ ຈຶ່ງເຮັດໃຫ້ກະດູກບໍ່ໄດ້ຮັບການບຳລຸງຮັກສາ ຈົນພາໃຫ້ເກີດມີອາການຂາດທາດແຄວຊຽວ ເຮັດໃຫ້ກະດູກຜ່ອຍ ແລະ ບາງ.

**4. ຄວາມດັນເລືອດສູງ:** ສຳລັບໃຜທີ່ເປັນຄວາມດັນເລືອດສູງຢູ່ແລ້ວ ຈຳເປັນທີ່ຈະຕ້ອງໄດ້ລະມັດລະວັງໃນການດື່ມກາເຟ ເພາະຖ້າດື່ມຫຼາຍເກີນໄປ ຈະໄປກະຕຸ້ນການປ່ອຍສານອະດີນໍລິນ (adrenaline) ເຊິ່ງຈະເຮັດໃຫ້ການເຮັດວຽກຂອງຫົວໃຈເພີ່ມຂຶ້ນ ແລະ ເຮັດໃຫ້ຫົວໃຈຂ້ອນຂ້າງເຕັ້ນແຮງ ແລະ ໄວຂຶ້ນ, ຄວາມດັນເລືອດກໍຈະເພີ່ມຂຶ້ນ ອັນເປັນສາເຫດທີ່ພາເຮັດໃຫ້ເກີດພະຍາດອື່ນໆຕື່ມອີກ.

**5. ພະຍາດກະເພາະອາຫານ:** ການດື່ມກາເຟຫຼາຍເກີນໄປ ຈະໄປກະຕຸ້ນການປ່ອຍອາຊິດອອກມາ ເຊິ່ງອາຊິດທີ່ປ່ອຍອອກມາຫຼາຍກວ່າປົກກະຕິ ຈະເພີ່ມໂອກາດໃຫ້ກະເພາະຖືກທຳລາຍຫຼາຍຂຶ້ນ ສຳລັບທ່ານໃດທີ່ເປັນໂຣກກະເພາະຢູ່ແລ້ວ ການດື່ມກາເຟຫຼາຍເກີນໄປ ຈະກະຕຸ້ນໃຫ້ມີບາດແຜໃນກະເພາະຫຼາຍຂຶ້ນ ພາໃຫ້ເກີດອາການເຈັບທ້ອງຢ່າງຮຸນແຮງ.

ແນ່ນອນວ່າ, ການດື່ມກາເຟ ມີຜົນປະໂຫຍດຫຼາຍຕໍ່ຮ່າງກາຍ ແຕ່ຖ້າດື່ມຫຼາຍເກີນໄປ ຈະສົ່ງຜົນບໍ່ດີຕໍ່ຮ່າງກາຍໄດ້ເຊັ່ນດຽວກັນ; ດັ່ງນັ້ນ, ຄວນພະຍາຍາມຄວບຄຸມການກິນກາເຟໃນປະລິມານທີ່ເໝາະສົມ ແຕ່ກໍຕ້ອງເອົາໃຈໃສ່ໃນການກິນອາຫານໃຫ້ຄົບ 5 ໝູ່ ເພື່ອໃຫ້ຮ່າງກາຍໄດ້ຮັບສານອາຫານທີ່ສົມບູນ ແລະ ຫຼຸດຜ່ອນຄວາມສ່ຽງຕໍ່ພະຍາດຕ່າງໆ.

**ຂໍ້ມູນຈາກ: www.sanook.com**

---

**ອາດ ກະວີລາວ**

# ຄຳຂໍຂອງຄູອາສາ

**# ສາວຄູ ວັງຄຳກລິ່ນ**

❊ ກະດອງໃຈຍຶດໝັ້ນ ຝັນໄຝ່ເປັນຄູ
ຈຶ່ງຫາຮຽນວິຊາຄູ ດັ່ງໃຈປະສົງມຸ້ງ
ໃບປະກາດມີພ້ອມ ຄະແນນດີຍໍຍື່ນ
ປະປິ່ງໃຈແນ່ແລ້ວ ອາສາເຂົ້າສິດສອນ ທ່ານເອີຍ

❊ ເຖິງຊິໄກຫ່າງບ້ານ ຖານຖິ່ນດິນນາ
ຈາກປ້າລຸງອາວອາ ແມ່ມານດາເຖົ້າ
ມາຢູ່ເນີນອນພີ້ ແດນໄກອາໄສເພິ່ນ
ມີຕູບພໍເພິ່ງຊື້ນ ຫາກິນຕາມໂຄກກວ້າງ ຄູຕ້ອງອົດທົນ ນັ້ນແລ້ວ

❊ ຫຼາຍວຽກງານໃຫຍ່ນ້ອຍ ຂານເຮັດເກີນແຮງ
ເພື່ອແຂ່ງຊີງຜົນງານ ເກັບປະສົບການພ້ອມ
ເດີກທ່ຽງຄືນຂຽນແຕ້ມ ບົດສອນພຽນພໍ່າ
ນຳເອົາຄວາມຮັບຮູ້ ມາສອນໃຫ້ໝູ່ນັກຮຽນ

❊ ແມ່ນວ່າ ແສນຍາກຫຍຸ້ງ ລຳບາກກາຍໃຈ
ຄວາມຫວັ່ນໄຫວມາວົນ ຂົ່ມມະໂນຈົນທໍ້
ຊິໄປຕໍ່ ຫຼື ຊິພໍພຽງນີ້ ຈິດຊີວິໂຊມປ່ວຍ
ຫົນຫວາຍໃຈຊູ່ມື້ ຖາມພ້ອມຕອບເອງ

❊ 8-9 ປີຢູ່ຖ້າ ຕົວເລກລັດຖະກອນ
ທຸກຄ່ຳຄືນນອນຄິດ ເມື່ອໃດຊິມາໃກ້
ຫຼາຍຄົນໂຈເຈເວົ້າ ໂຄຕາເຮົາບໍ່ມີງ່າຍ
ເສຍດາຍວັນເວລາ ຄິດມາພໍຢາກລາອອກຊ້ຳ ອີຕົນນ້ອງມຸ່ງນັກຮຽນ ຮຽມເອີຍ

❊ ຄູອາສາກາບກົ້ມ ປະນົມນອບເໜືອສຽນ
ຂໍໃຫ້ທາງການນຳ ຊ່ວຍຄູອາສາທ້ອນ
ຂໍອ້ອນວອນເຫັນໃຈດ້ວຍ ຄູອາສາທົ່ວເຂດຖິ່ນ
ຢ່າໃຫ້ ຄວາມມຸ່ງຫວັງຄູອາສາດັບສິ້ນ ຊິຕາຍຖິ້ມແມ່ນທັງເປັນ ແທ້ໆໄດ໋ ທ່ານເອີຍ.

---

**ສັບສາຍ ລະບາຍ**



*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

✳ *ໂອ້ຈະສິ້ນເດືອນກັນຍາ ກຽມຕ້ອນຮັບ**ເດືອນຕຸລາ**ຢ່າງເປັນທາງການໃນສະບັບຕໍ່ໄປເຊິ່ງເຫັນໄດ້ວ່າມີຫຼາຍເຫດການສຳຄັນ ນັ້ນກໍຄື **ວັນຄູແຫ່ງຊາດ** ວັນ**ປະກາດເອກະລາດ** ວັນ**ບຸນອອກພັນສາ** (ປະວໍລະນາ) ແລະ ຊ່ວງ**ເຮືອບະຄອນຫຼວງວຽງຈັນ** ແຕ່ກ່ອນຈະໄປເຖິງເຫດການສຳຄັນເຫຼົ່ານັ້ນ ຈະຊວນທ່ານມາເບິ່ງເບື້ອງ ບຸນໃຫຍ່ກາງພັນສາ **ທີ 29 ກັນຍາ** ນີ້ມາຫຍັບໃກ້ ຫຼາຍຄົນກຽມໃຈຄ້າສົບຫາກຸ້ສົບເພີ່ນ ກຽມຕັກບາດຢາດນ້ຳ **ບຸນສະຫຼາກ**ສົບມາ **ນັ້ນແລ້ວ!***

✳ ***ວັນ**ຄູແຫ່ງຊາດ ຫຍັບຈໍ່ມເຂົ້າມາ (**7 ຕຸລາ 1994 - 7 ຕຸລາ 2023**) ທີ່ຈະໝູນວຽນມາບັນຈົບຄົບຮອບ 29 ປີ ເນື່ອງໃນໂອກາດນີ້ ຂໍອວຍພອນໃຫ້ **ຄູທຸກທ່ານ**ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ການງານ ແລະ ເປັນຮົ່ມໂພຮົ່ມໄຊໃຫ້ແກ່ສັງຄົມລາວຕະຫຼອດໄປ ຄູຄຸນຫລາຍມາກລົ້ນ ເໜືອສິ່ງໃດໆ ເປັນທອນໄພເຍືອງທາງ ສ່ອງແສງ ເຍືອງໄຕ້ ເປັນຜູ້ນຳພາໃຫ້ ສິດໄປເຖິງຝັ່ງ ເປັນແມ່ພິມກໍ່ສ້າງ ຄົນໃຫ້ພັດທະນາ **ຊອບແລ້ວ!***

---

## ຊອບຍິ້ມ

**# ແອ່ບຕຸ້ງ**

### ນອນບໍ່ຫຼັບ

ພະນັກງານຄົນໜຶ່ງຈົ່ມໃຫ້ໝູ່ຟັງວ່າ

\+ ຕັ້ງແຕ່ໄດ້ຫົວໜ້າຄົນໃໝ່ມານີ້ ກູນອນຢູ່ຫ້ອງການບໍ່ໄດ້ເລີຍ ໜ່າຍເດ.

\- ອ້າວ! ເປັນຫຍັງລາວຕິດຕາມມຶງຫວາ?

\+ ບໍ່ດອກ ລາວໂກນແຮງໂພດ

\- !?!?



## ຄະຕິເຕືອນໃຈ

**# ດອກຫຍ້າ**

ຄັນວ່າຄວາມຮູ້ໜ້ອຍ ຢ່າປະເອີນວ່າມີຫຼາຍ
ຢ່າໄດ້ເມົາມົວຫລົງ ວ່າຕົນມີຄວາມຮູ້
ຄືດັ່ງກົບໃນສ້າງ ທາງທະເລບໍ່ເຄີຍຜ່ານ
ເຫັນແຕ່ບ່ານ້ຳສ້າງນ້ອຍ ວ່າໄກກ້ວາງກວ່າທະເລ




# ສໍາຄັນ - ຈໍາເປັນ - ຕ້ອງການ

"ສໍາຄັນ", "ຈໍາເປັນ" ແລະ "ຕ້ອງການ" ທັງສາມຄໍານີ້ມີຄວາມໝາຍຄື ແລະ ຕ່າງກັນ ດັ່ງນີ້:

"ສໍາຄັນ" ເປັນຄໍາວິເສດ ຈາກເຄົ້າຂະແມ **សម្គាល់** (ສົມຄາລ "ເຮັດໃຫ້ຮູ້") ເມື່ອຮັບມາໃຊ້ໃນພາສາລາວ ກໍອອກສຽງເປັນ "ສໍາຄັນ" ໝາຍເຖິງ "ເປັນພິເສດກວ່າທໍາມະດາ" ເຊັ່ນ

- ເລື່ອງນີ້ເປັນເລື່ອງສໍາຄັນ.

"ສໍາຄັນ" ຍັງໝາຍເຖິງ "ມີຄຸນຄ່າ" ເຊັ່ນ

- ຂອງສິ່ງນີ້ເປັນຂອງສໍາຄັນ.

"ສໍາຄັນ" ຍັງໝາຍເຖິງ "ມີຊື່ສຽງ" ເຊັ່ນ

- ທ່ານຜູ້ນີ້ເປັນບຸກຄົນສໍາຄັນທີ່ໃຜໆກໍຮູ້ຈັກ.

"ສໍາຄັນ" ຍັງໝາຍເຖິງ "ຄວນຈື່ຈໍາເອົາໄວ້" ເຊັ່ນ

- ຫົວຂໍ້ນີ້ເປັນຫົວຂໍ້ສໍາຄັນຢູ່ໃນເອກະສານ.

"ຈໍາເປັນ" ເປັນຄໍາວິເສດ ໝາຍເຖິງ "ຕ້ອງເປັນແນວນັ້ນ, ຕ້ອງເຮັດ, ຂາດບໍ່ໄດ້" ເຊັ່ນ

- ລາວຈໍາເປັນຕ້ອງໄດ້ໄປຊອກຫາເຮັດວຽກຢູ່ໃນເມືອງ ເພາະນາຢູ່ບ້ານແລ້ງ.
- ພໍ່ຈໍາເປັນຕ້ອງໄດ້ຂາຍນາ ເພື່ອເອົາເງິນໃຫ້ລູກຮຽນຕໍ່ມະຫາວິທະຍາໄລ.
- ເຂົ້າໜຽວເປັນອາຫານທີ່ຈໍາເປັນຂອງຄົນລາວ.

"ຕ້ອງການ" ເປັນຄໍາກິລິຍາ ທີ່ໝາຍເຖິງ "ປາດຖະໜາ, ຢາກໄດ້, ຢາກມີ, ປະສົງ; ຢາກໄດ້ສິ່ງໃດສິ່ງໜຶ່ງຕາມຄວາມມຸ່ງໝາຍທີ່ມີ" ເຊັ່ນ

- ຜູ້ໂດຍສານຍອມຈ່າຍເງິນຄ່າໂດຍສານເພີ່ມ ເພາະພວກເຂົາຕ້ອງການຄວາມສະດວກສະບາຍໃນການເດີນທາງ.
- ລາວຕ້ອງການຊື້ດິນສວນ ເພື່ອປູກໝາກໄມ້ກິນໝາກສົ່ງຂາຍຕະຫຼາດ.
- ເດັກດ້ອຍໂອກາດ ຕ້ອງການຄວາມຊ່ວຍເຫຼືອຈາກຜູ້ມີໃຈບຸນ

## ຈີນ-ອາຊຽນ ຈະລົງເລິກການຮ່ວມມືໃນຂົງເຂດພະລັງງານສະອາດ



ຕາມການລາຍງານຂ່າວໃນວັນທີ 19 ກັນຍາຜ່ານມາໃຫ້ຮູ້ວ່າ: ສັບປະດາການຮ່ວມມືດ້ານພະລັງງານສະອາດຈີນ-ອາຊຽນ 2023 ທີ່ຮ່ວມກັນຈັດຂຶ້ນໂດຍກົມພະລັງງານແຫ່ງຊາດຈີນ, ອົງການປົກຄອງແຂວງໄຫຫຼາ ແລະ ກະຊວງພະລັງງານ ແລະ ຊັບພະຍາກອນບໍ່ແຮ່ຂອງອິນໂດເນເຊຍ ໄດ້ໄຂຂຶ້ນຢູ່ນະຄອນໄຫໂຂ ແຂວງໄຫຫຼາ ຂອງຈີນ, ຫຼາຍຝ່າຍໄດ້ສະແດງທ່າທີຈະລົງເລິກການຮ່ວມມືໃນຂົງເຂດພະລັງງານສະອາດ.

ທ່ານ ຈ່າງ ຈ້ຽນ ຮວາ ຫົວໜ້າກົມພະລັງງານແຫ່ງຊາດຈີນ ໄດ້ກ່າວໃນພິທີໄຂວ່າ: ຈີນຍິນດີສືບຕໍ່ເພີ່ມທະວີການຮ່ວມມືຕົວຈິງກັບບັນດາປະເທດສະມາຊິກອາຊຽນໃນການເຊື່ອມຕໍ່ດ້ານພະລັງງານໄຟຟ້າ, ພະລັງງານໝູນວຽນ ແລະ ດ້ານອື່ນໆ.

ທ່ານ ກາວ ກິມ ຮູນ ເລຂາທິການໃຫຍ່ອາຊຽນກ່າວວ່າ: ຫວັງວ່າອາຊຽນ ແລະ ຈີນຈະຖືເອົາສັບປະດາການຮ່ວມມືດ້ານພະລັງງານສະອາດເປັນເວທີທີ່ສໍາຄັນ, ຮ່ວມກັນຊຸກຍູ້ໃຫ້ພະລັງງານຫັນເປັນແບບສີຂຽວ ແລະ ປ່ອຍກາກບອນຕໍ່າ.

ທ່ານ ອາຣີຟິນ ຕັສຣິຟ ລັດຖະມົນຕີກະຊວງພະລັງງານ ແລະ ຊັບພະຍາກອນບໍ່ແຮ່ຂອງອິນໂດເນເຊຍກ່າວໃນພິທີໄຂວ່າ: ອິນໂດເນເຊຍ ຍິນດີຕັ້ງໜ້າເພີ່ມທະວີການແລກປ່ຽນບົດຮຽນຕົວຈິງກ່ຽວກັບການປະດິດສ້າງໃໝ່ຂອງເຕັກໂນໂລຊີດ້ານພະລັງງານ, ຊ່ວຍເຫຼືອການພັດທະນາຢ່າງຂະໜາດໃຫຍ່ດ້ານພະລັງງານສະອາດ.

## ສປຊ ສະເໜີ 6 ເປົ້າໝາຍຮີບດ່ວນໃນລະດັບສາກົນ ເພື່ອຟື້ນຟູວາລະດ້ານການພັດທະນາ



ກອງປະຊຸມສຸດຍອດວ່າດ້ວຍເປົ້າໝາຍການພັດທະນາແບບຍືນຍົງ ຫຼື ປພຍ (SDG Summit) ເຊິ່ງຈັດຂຶ້ນໃນໄລຍະກາງສະໄໝຂອງການຈັດຕັ້ງປະຕິບັດວາລະ 2030 ເພື່ອການພັດທະນາແບບຍືນຍົງໃນລະຫວ່າງວັນທີ 18-19 ກັນຍາ 2023 ທີ່ນະຄອນນິວຢອກ ສ. ອາເມຣິກາ.

ກອງປະຊຸມສຸດຍອດໃນປີນີ້ ກໍເພື່ອທົບທວນຄືນບັນດາຜົນສໍາເລັດ, ຄວາມຄືບໜ້າ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງໃນລະດັບສາກົນ ພ້ອມທັງເປັນໂອກາດໃຫ້ບັນດາປະເທດສະມາຊິກ ຢືນຢັນຄືນຄວາມໝາຍໝັ້ນຂອງຕົນ ໃນການເລັ່ງລັດຈັດຕັ້ງປະຕິບັດ ປພຍ ໃນຊຸມປີຕໍ່ໜ້າ.

ທ່ານ ອັນໂຕນີໂອ ກູເຕເຣັດສ໌ (Antonio Guterres) ເລຂາທິການໃຫຍ່ອົງການ ສປຊ ໄດ້ຢໍ້າຄືນຄວາມໝາຍໝັ້ນຂອງວົງຄະນະຍາດສາກົນ ຢູ່ໃນກອງປະຊຸມສຸດຍອດ ທີ່ຮັບຮອງເອົາ ປພຍ ໃນປີ 2015 ໃນການແກ້ໄຂຄວາມທຸກຍາກ, ໄພອຶດຫິວ, ຂໍ້ຂັດແຍ່ງ ແລະ ສິ່ງທ້າທາຍຕ່າງໆ. ເຖິງແນວໃດກໍຕາມ, ຕະຫຼອດໄລຍະຜ່ານມາ ໃນທົ່ວໂລກສາມາດຈັດຕັ້ງປະຕິບັດໄດ້ພຽງແຕ່ 15% ຂອງບັນດາເປົ້າໝາຍທັງໝົດ.

ຕໍ່ສະພາບການດັ່ງກ່າວ, ເລຂາທິການໃຫຍ່ ສປຊ ໄດ້ຮຽກຮ້ອງໃຫ້ວົງຄະນະຍາດສາກົນ ຮ່ວມກັນສ້າງແຜນງານເພື່ອຟື້ນຟູວາລະດ້ານການພັດທະນາດັ່ງກ່າວ ພ້ອມທັງໄດ້ສະເໜີ 6 ເປົ້າໝາຍຮີບດ່ວນໃນລະດັບສາກົນ ຄື: (1) ການລຶບລ້າງໄພອຶດຫິວ ເພື່ອຮັບປະກັນການເຂົ້າເຖິງໂພຊະນາການທີ່ຄົບຖ້ວນສໍາລັບທຸກຄົນ, (2) ການຫັນປ່ຽນໄປສູ່ການນໍາໃຊ້ພະລັງງານທົດແທນ ກໍຄືການຫຼຸດຜ່ອນການປ່ອຍອາຍກາກບອນ, (3) ການຫັນເປັນດີຈີຕອນ ເພື່ອເຊື່ອມໂຍງທາງດ້ານເຕັກໂນໂລຊີທັນສະໄໝ, (4) ການປັບປຸງຄຸນະພາບຂອງລະບົບການສຶກສາທີ່ທຸກຄົນສາມາດເຂົ້າເຖິງໄດ້ໃນທຸກເກນອາຍຸ; (5) ການສົ່ງເສີມໃຫ້ມີວຽກເຮັດງານທໍາທີ່ດີ ແລະ ມີລະບົບປະກັນສັງຄົມ ແລະ (6) ການປົກປັກຮັກສາທໍາມະຊາດ ເພື່ອຢຸດຕິວິກິດການທີ່ຕິດພັນກັບການປ່ຽນແປງດິນຟ້າອາກາດ, ມົນລະພິດ ແລະ ການສູນເສຍຊີວະນາງພັນ, ພ້ອມທັງຮຽກຮ້ອງໃຫ້ບັນດາປະເທດ ນໍາໃຊ້ກາລະໂອກາດນີ້ ເພື່ອຮ່ວມກັນຮັກສາຄໍາໝາຍໝັ້ນໃນລະດັບສາກົນດັ່ງກ່າວ ເພື່ອຄວາມຫວັງທີ່ຈະສ້າງການປ່ຽນແປງທີ່ສໍາຄັນສໍາລັບທຸກຄົນໃນທົ່ວໂລກ.

ທ່ານ ນາງ ພໍລາ ນາຣ໌ແວຣ໌ ປະທານສະພາເສດຖະກິດ-ສັງຄົມ ສປຊ ໄດ້ຍົກໃຫ້ເຫັນບັນດາສິ່ງທ້າທາຍໃນການຈັດຕັ້ງປະຕິບັດ ປພຍ ທ່າມກາງສະພາບວິກິດການຫຼາຍດ້ານທີ່ກໍາລັງເກີດຂຶ້ນໃນປັດຈຸບັນ ແລະ ເຫັນວ່າ ກອງປະຊຸມຄັ້ງນີ້ ຖືເປັນຈຸດທີ່ຫັນປ່ຽນໃນຄວາມພະຍາຍາມຂອງສາກົນ ເພື່ອບັນລຸ ປພຍ. ສະພາເສດຖະກິດ-ສັງຄົມ ສປຊ ຈະສືບຕໍ່ນໍາເອົາຜົນຂອງກອງປະຊຸມສຸດຍອດແລະກອງປະຊຸມປິ່ນອ້ອມທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດອີງຕາມພາລະບົດບາດຂອງຕົນ ໃນການສະໜັບສະໜູນຄວາມພະຍາຍາມ ແລະ ສົ່ງເສີມການປຶກສາຫາລືໃນຂອບຫຼາຍຝ່າຍ ເພື່ອຜັນຂະຫຍາຍແຜນງານຕ່າງໆໃຫ້ເປັນຮູບປະທໍາຫຼາຍຂຶ້ນ.

ກອງປະຊຸມ ໄດ້ຮັບຮອງເອົາຖະແຫຼງການທາງການເມືອງ ແລະ ສືບຕໍ່ດໍາເນີນມາກອະພິປາຍທົ່ວໄປ ໄປຄຽງຄູ່ກັບເວທີປຶກສາຫາລື ໃນລະດັບຜູ້ນໍາເຊິ່ງປະກອບດ້ວຍ 6 ຫົວຂໍ້ ທີ່ຕິດພັນກັບການສືບຕໍ່ສົ່ງເສີມຄວາມພະຍາຍາມຂອງສາກົນ ໃນການຈັດຕັ້ງປະຕິບັດ ປພຍ ໃນຕໍ່ໜ້າ.




## ວິທີເຮັດວຽກ

**ພາກທີ 4**

**ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)**

**ຂ) ພະຍາດຍົກພັກຍົກພວກ:**

ພະຍາດຕົວນີ້ ກໍເປັນອັນຕະລາຍຄືກັນ, ຕັ້ງແຕ່ບ່ອນຖືພັກພວກ ກໍຈະກາຍເປັນການແບ່ງແຍກ. ຜູ້ໃດຖືກໃຈໂຕ ແມ່ນວ່າຈະຊົ່ວປານໃດກໍຖືວ່າມັນດີ, ມັນເຮັດວຽກການອັນຊົ່ວ ກໍຖືວ່າເປັນອັນຈົບງາມ, ແລ້ວກໍປິດເອົາກັນ ສະໜັບສະໜູນກັນ. ຜູ້ໃດບໍ່ຖືກໃຈໂຕ ແມ່ນມັນຈະເປັນຄົນດີພຽງໃດ ກໍເວົ້າວ່າເປັນອັນຊົ່ວ ແລ້ວກໍຊອກວິທີທັບຖົມຕິຕຽນ ແລະ ຢຽບຢໍ່າໃຫ້ຈົມລົງ.

ພະຍາດຕົວນີ້ເປັນອັນຕະລາຍໃຫ້ແກ່ພັກຫຼາຍທີ່ສຸດ, ມັນເຮັດໃຫ້ເສຍຫາຍເຖິງຄວາມເປັນເອກະພາບຂອງພັກ, ມັນເຮັດໃຫ້ພັກຫຼຸດຜ່ອນຄວາມສາມາດຂອງສະມາຊິກລົງ ແລະ ບໍ່ປະຕິບັດນະໂຍບາຍຂອງຕົນໄດ້ຢ່າງຄົບຖ້ວນ. ມັນເຮັດໃຫ້ເສຍຄວາມຮັກແພງສະໜິດສະໜົມລະຫວ່າງສະມາຊິກດ້ວຍກັນ ແລະ ກໍ່ໃຫ້ເກີດຄວາມລະແວງສົງໄສກັນຂຶ້ນ ແລ້ວກໍແຕກສາມັກຄີພາຍໃນ, ເປັນເຫດໃຫ້ພັກອ່ອນແຮງລົງ.

**ຄ) ພະຍາດຜິວເຜີນ:**

ບໍ່ເບິ່ງກວ້າງເຫັນໄກ ບໍ່ຄິດຮອດບັນຫາທີ່ໃຫຍ່ຫຼວງ ແຕ່ແລ້ວຊໍ້າພັດກະຈູ້ກະຈີ້ນໍາແຕ່ວຽກລະອຽດມຸ່ນຍ່ອຍ, ຍົກຕົວຢ່າງກໍຄືການເພີ່ມພູນຜະລິດຜົນ ແລະ ລໍາລຽງສະບຽງອາຫານໃຫ້ກອງທັບ ຊໍ້າບໍ່ຄິດຮອດ, ແລ້ວຊໍ້າພັດມາຄິດຮອດແຕ່ເລື່ອງຈະໃຊ້ເຂົ້າເຢັນ ແລະ ນໍ້າແກງເຫຼືອຢູ່ໃນເຮືອນຄົວ.

ຄົນຜູ້ເປັນແນວນັ້ນ ຈະມອງເຫັນແຕ່ຜົນໄດ້ຜົນເສຍອັນນ້ອຍໆ ແຕ່ບໍ່ເຫັນຜົນໄດ້ຜົນເສຍອັນໃຫຍ່ຫຼວງ.

ອ່ານຕໍ່ສະບັບໜ້າ...

## ໂຮງງານໃນອິນໂດເນເຊຍ ອາດຖືກສັ່ງປິດ ຖ້າບໍ່ຕິດຕັ້ງລະບົບຄວບຄຸມມົນລະພິດ

ທ່ານ ໂຈໂກ ວິໂດໂດ ປະທານາທິບໍດີອິນໂດເນເຊຍ ໄດ້ຂູ່ຈະລົງໂທດໂຮງງານທີ່ປະຕິເສດຕິດຕັ້ງລະບົບຄວບຄຸມມົນລະພິດ ເພື່ອຮັບມືຄຸນນະພາບອາກາດທີ່ບໍ່ດີໃນນະຄອນຫຼວງຈາກາຕາ ເມືອງຫຼວງຂອງປະເທດ.



ອີງຕາມສໍານັກຂ່າວຊິນຮົວ ລາຍງານວ່າ: ທ່ານ ໂຈໂກ ວິໂດໂດ ເຕືອນວ່າ: ຈະຕ້ອງມີການລົງໂທດ ແລະ ສັ່ງປິດໂຮງງານອຸດສາຫະກໍາແນ່ນອນ ຖ້າໂຮງງານເຫຼົ່ານັ້ນປະຕິເສດການຕິດຕັ້ງລະບົບບໍາບັດອາກາດ ເພາະປະຊາຊົນຕ້ອງເສຍຄ່າໃຊ້ຈ່າຍສູງເພື່ອຮັກສາສຸຂະພາບ.

ທັງນີ້, ລັດຖະບານອິນໂດເນເຊຍໄດ້ອອກນະໂຍບາຍເຮັດວຽກຢູ່ເຮືອນ, ກໍານົດໃຫ້ຜູ້ຂັບຂີ່ລົດໃຫຍ່ທົດສອບການປ່ອຍມົນລະພິດ ລວມທັງກະຕຸ້ນປະຊາຊົນໃຫ້ໃຊ້ລະບົບຂົນສົ່ງສາທາລະນະ ແລະ ລົດໄຟຟ້າ ເພື່ອຫຼຸດມົນລະພິດທາງອາກາດ.

ຂະນະດຽວກັນ, ທ່ານ ໂຈໂກ ວິໂດໂດ ໄດ້ເລືອກທ່ານ ລູຮັດ ບິນຊາ ປັນໄຈຕັນ ລັດຖະມົນຕີອາວຸໂສຂອງອິນໂດເນເຊຍ ເປັນຜູ້ນໍາການຕໍ່ສູ້ມົນລະພິດທາງອາກາດ ເຊິ່ງລວມທັງການປູກຕົ້ນໄມ້, ການປ່ຽນແປງສະພາບອາກາດ ແລະ ການບັງຄັບໃຊ້ກົດໝາຍ.

ເຝົ້າໄວ້ ໄດ້ບົດຮຽນ

# ກຽມພ້ອມຮັບມືກັບສັງຄົມຜູ້ອາຍຸສູງ

❖ ວິເສດ ສະແຫວງສຶກສາ

ມາຮອດປັດຈຸບັນຫຼາຍປະເທດໄດ້ກ້າວເຂົ້າສູ່ເສັ້ນແດງແຫ່ງສັງຄົມຜູ້ເຖົ້າມາໄດ້ຫຼາຍປີແລ້ວ ແລະ ອີກຫຼາຍປະເທດພວມຢູ່ໃນສະພາບກຽມພ້ອມເພື່ອຮັບມືກັບບັນຫາປະຊາກອນອາຍຸສູງ. ສ່ວນ ສປປ ລາວ ພວກເຮົາຍັງອີກໄກຈຶ່ງຈະເຖິງເສັ້ນແດງດັ່ງກ່າວ ແຕ່ກໍຄວນເບິ່ງບົດຮຽນຂອງຕ່າງປະເທດເພິ່ນມີນະໂຍບາຍ ສະຫວັດດີການສັງຄົມແນວໃດ ເພື່ອເບິ່ງແຍງດູແລຜູ້ເຖົ້າ. ດັ່ງນັ້ນ ບົດຄວາມປະຈຳວັນນີ້ ຈຶ່ງຂໍເວົ້າບາງດ້ານຂອງນະໂຍບາຍດັ່ງກ່າວ ທີ່ປະເທດຈຳນວນໜຶ່ງໄດ້ທຸ້ມເທງົບປະມານໃສ່.

**ຍີ່ປຸ່ນ** ໃນຊຸມປີຜ່ານມາທາງການຍີ່ປຸ່ນໄດ້ຕັ້ງງົບປະມານຈຳນວນມະຫາສານເພື່ອສ້າງສູນຮັບຮອງຜູ້ເຖົ້າ ລວມທັງໂຮງພະຍາບານທີ່ເຮັດໜ້າທີ່ເບິ່ງຄົນໃນໄວນີ້ ໄປຄຽງຄູ່ກັບນຳເຂົ້າແຮງງານຕ່າງປະເທດ ເພື່ອບັນຈຸເຂົ້າເຮັດວຽກຕາມສູນດັ່ງກ່າວ. ນອກຈາກນັ້ນ, ວິຊາ “ເບິ່ງແຍງຜູ້ເຖົ້າ” ຍັງໄດ້ຖືກບັນຈຸເຂົ້າໃນລະບົບການສຶກສາຂອງຍີ່ປຸ່ນ. ຂໍ້ມູນເມື່ອປະມານ 5 ປີຜ່ານມາໃຫ້ຮູ້ວ່າ ບັນດາໂຮງຮຽນວິຊາຊີບ, ສະຖາບັນການສຶກສາ ຕະຫຼອດຮອດມະຫາວິທະຍາໄລຕ່າງໆ ທີ່ມີຫຼັກສູດຝຶກອົບຮົມວິຊາເບິ່ງແຍງຜູ້ເຖົ້ານັ້ນມີທັງໝົດເກືອບ 400 ແຫ່ງໃນທົ່ວປະເທດ ຍີ່ປຸ່ນ ບໍ່ພຽງແຕ່ເທົ່ານັ້ນ, ນັກສຶກສາຕ່າງປະເທດທີ່ສະໝັກເຂົ້າຮຽນວິຊານີ້ ກໍມີຈຳນວນ 2000 ຄົນ ກວມເອົາ 30% ຂອງນັກຮຽນນັກສຶກສາທີ່ເລືອກຮຽນວິຊານີ້ທັງໝົດ. ຂ່າວບອກວ່າເມື່ອທຽບກັບຄວາມຕ້ອງການຕົວຈິງຂອງບັນດາສູນໃນທົ່ວປະເທດແລ້ວ, ຈຳນວນພະນັກງານໃນອາຊີບນີ້ຍັງໜ້ອຍເກີນໄປ ດັ່ງນັ້ນ, ທາງການຍີ່ປຸ່ນຈຶ່ງໄດ້ລິເລີ່ມສ້າງຫຸ່ນຍົນ ເພື່ອເຮັດໜ້າທີ່ໃຫ້ບໍລິການຜູ້ເຖົ້າ. ການຜະລິດຫຸ່ນຍົນຊ່ວຍເຫຼືອຜູ້ເຖົ້າຕາມສູນຕ່າງໆນັ້ນ ໄດ້ເລີ່ມມາແຕ່ປີ 2013 ແລະ ໄດ້ທົດລອງນຳໃຊ້ຢູ່ 10 ສູນໃນປີ 2016 ເພື່ອຖອດຖອນບົດຮຽນ. ເປົ້າໝາຍການທົດລອງແມ່ນເພື່ອເກັບກຳຂໍ້ມູນກ່ຽວກັບຄວາມຈຳເປັນດ້ານຕ່າງໆ ໃນການເບິ່ງແຍງຜູ້ເຖົ້າ ໂດຍສະເພາະແມ່ນບັນຫາທີ່ພະນັກງານໄດ້ພົບພໍ້ໃນເວລາປະຕິບັດໜ້າທີ່ຢູ່ຕາມບັນດາສູນ. ຜົນຈາກການທົດລອງໄດ້ນຳເອົາໄປໃຊ້ເພື່ອອອກແບບຫຸ່ນຍົນໃຫ້ມີຄວາມສົມບູນຂຶ້ນໃນການຊ່ວຍເຫຼືອຜູ້ເຖົ້າເວລາລຸກ, ນັ່ງ,ຍ່າງ ແລະ ຊ່ວຍອາບນ້ຳ- ເຮັດອະນາໄມຮ່າງກາຍ. ລັດຖະບານຍີ່ປຸ່ນ ໃຫ້ງົບປະມານສະໜັບສະໜູນການສ້າງຫຸ່ນຍົນໃນອັດຕາ 2/3 ຂອງມູນຄ່າທັງໝົດໃນການຄົ້ນຄວ້າ ແລະ ຜະລິດເຄື່ອງມື ສະເພາະນີ້.

**ສປ ຈີນ** ສະຖິຕິໃນທ້າຍປີ 2019 ໃຫ້ຮູ້ວ່າປະຊາກອນຈີນ ທີ່ມີອາຍຸແຕ່ 60 ປີຂຶ້ນໄປນັ້ນມີທັງໝົດ 250 ລ້ານຄົນ ແລະ ຄາດວ່າຈະເພີ່ມຂຶ້ນເປັນ 500 ລ້ານຄົນພາຍໃນປີ 2050. ເພື່ອຮັບມືກັບສັງຄົມຜູ້ເຖົ້າໄວ້ແຕ່ເນີ່ນໆ ທາງການຈີນໄດ້ສ້າງ ແລະ ເຜີຍແຜ່ກົດລະບຽບກ່ຽວກັບການບໍລິຫານຄຸ້ມຄອງສູນເບິ່ງແຍງລ້ຽງດູ ຜູ້ເຖົ້າໃນທ້າຍປີ 2017 ໂດຍກະຊວງ ກິດຈະການພົນລະເຮືອນ. ເນື້ອໃນຂອງກົດລະບຽບໄດ້ກຳນົດແຈ້ງ ກ່ຽວກັບອຸປະກອນອຳນວຍຄວາມສະດວກຢູ່ຕາມສູນບໍລິການ ກໍຄືເຮືອນພັກສຳລັບຜູ້ເຖົ້າ ເຊັ່ນ ອຸປະກອນສື່ສານ ລວມມີໂທລະສັບ ແລະ ອິນເຕີເນັດ ພ້ອມດ້ວຍນັກວິຊາການ ເພື່ອຝຶກແອບບັນດາຜູ້ເຖົ້າໃຫ້ຮູ້ນຳໃຊ້ອຸປະກອນເຫຼົ່ານີ້. ກົດລະບຽບຍັງໄດ້ກຳນົດຫຼັກການປະພຶດຂອງພະນັກງານ ທີ່ເຮັດວຽກປະຈຳຢູ່ສູນເບິ່ງແຍງຜູ້ເຖົ້າ ຄືຕ້ອງປະຕິບັດຕໍ່ຜູ້ເຖົ້າດ້ວຍຄວາມສຸພາບ, ມີຄວາມອົດທົນ, ຮັກສາຄວາມລັບສ່ວນຕົວຂອງບັນດາຜູ້ເຖົ້າ. ທີ່ຕັ້ງຂອງເຮືອນພັກຜູ້ເຖົ້າຕ້ອງມີຄວາມປອດໄພ ແລະ ມີຄວາມເປັນສ່ວນຕົວສູງ. ໜ່ວຍງານຄຸ້ມຄອງເຮືອນພັກຕ້ອງກຳນົດແຜນໃຫ້ບໍລິການຢ່າງລະອຽດ, ມີລະບຽບການໃນການຮັບ ແລະ ແກ້ໄຂຄຳຮ້ອງທຸກຂອງບັນດາຜູ້ໃຊ້ບໍລິການ. ໃນຊຸມປີເລີ່ມຕົ້ນໃຫ້ບໍລິການເຮືອນພັກຜູ້ເຖົ້າ (2016) ນັ້ນ, ຢູ່ສປ ຈີນ ມີເຮືອນພັກຜູ້ເຖົ້າທັງໝົດ 140.000 ແຫ່ງມີຕຽງນອນ 7,3 ລ້ານໜ່ວຍຊຶ່ງຍັງໜ້ອຍກວ່າຄວາມຕ້ອງການຕົວຈິງຫຼາຍ ດັ່ງນັ້ນ, ຕໍ່ມາໃນປີ 2019 ທາງການຈີນຈຶ່ງໄດ້ເປີດກວ້າງການລົງທຶນຈາກຍີ່ປຸ່ນ ເພື່ອສ້າງສະຖານທີ່ເບິ່ງແຍງຜູ້ເຖົ້າ ຢູ່ເມືອງຍີຊິງ ແຂວງຊຽງຈູ ຈຳນວນ 800 ຫ້ອງໜ່ວຍ ເຊິ່ງປະກອບດ້ວຍອຸປະກອນອຳນວຍຄວາມສະດວກຕ່າງໆ ເຊັ່ນ ລະບົບອິນເຕີເນັດ, ມີການຕິດຕັ້ງອຸປະກອນ ປັນຍາປະດິດໃສ່ບ່ອນນັ່ງຫົວວິດຖ່າຍ ເພື່ອວັດແທກຄວາມດັນເລືອດແບບອັດຕາໂນມັດ.

ຕາມມາດຕະຖານສາກົນແລ້ວ, ປະເທດໃດທີ່ມີປະຊາກອນ ອາຍຸ 60 ຂຶ້ນໄປຈຳນວນ 10% ຂອງປະຊາກອນພາຍໃນປະເທດແລ້ວ ກໍຈະຖືກຂຶ້ນບັນຊີວ່າເປັນສັງຄົມຜູ້ອາຍຸສູງ.




## ລາວເຮັດຜູ້ດຽວໝົດ

*# ບ່າວກະບື*

**ຄູ:** "ສົງ, ພໍ່ຂອງຫຼານໄດ້ຊ່ວຍແກ້ບົດຝຶກຫັດພາສາອັງກິດໃຫ້ຫຼານແມ່ນບໍ່?"

**ສົງ:** "ບໍ່ໄດ້ຊ່ວຍດອກປ້າຄູ. ພໍ່ຫຼານແກ້ຜູ້ດຽວໝົດ".

## HE DID IT ALL

*# BAOKBU*

**Teacher:** "Song, did your father help you with your English exercise?"

**Song:** "No, teacher , he did it all alone!"

ອ່ານມ່ວນ ຊວນຍິ້ມ



ການເຄົາລົບປູຊະນີຍະສະຖານ ແມ່ນຄວາມສີວິໄລຂອງຄົນ

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank
ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED
ກຸ່ມບໍລິສັດ ອີພີແອວ ຈຳກັດຜູ້ດຽວ
EPL GROUP SOLE CO.,LTD

**ຜູ້ຊີ້ນຳ :** ທ່ານ ສົງຄຳ ວົງພະຈັນ
**ຄະນະຊ່ຽວຊານທີ່ປຶກສາ :** ທ່ານ ສີສຸພັນ ແສງສະຫວັນ; ທ່ານ ວິເສດ ສະແຫວງສຶກສາ; ທ່ານ ທອງດາ ສຸພາສິດ; ທ່ານ ຄຳຫວັນ ດາລາວົງ
**ຄະນະບັນນາທິການ :** ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ; ທ່ານ ອັນທະວີ ວົງພະຈັນ ຮອງ; ທ່ານ ເປຄຳ ລໍຄຳສອນ ຮອງ
**ກອງບັນນາທິການ :** ນາງ ກົງໃຈ ແສງອຳພັນ; ນາງ ສຸພາວັນ ຫອມສະນິດ; ນາງ ປາກາລັກ ພົມມີໄຊ
**ອອກແບບ - ຈັດໜ້າ :** ນາງ ນິດຕາ ຄຸນປາກດີ